# ບໍລິສັດ ມະຫະຫົນ ເຊົ່າສິນເຊື່ອ ມະຫາຊົນ

**ເອກະສານລາຍງານການເງິນ**

**ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2023**

**ສາລະບານ** **ໜ້າ**


| | |
|---|---|
| ບົດລາຍງານ ຂອງຜູ້ກວດສອບອິດສະຫຼະ | 1 - 5 |
| ໃບລາຍງານຖານະການເງິນ | 6 - 7 |
| ໃບລາຍງານຜົນໄດ້ຮັບ | 8 |
| ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ | 9 |
| ໃບລາຍງານກະແສເງິນສົດ | 10 - 11 |
| ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ | 12 - 27 |

**ບົດລາຍງານ ຂອງຜູ້ກວດສອບອິດສະຫຼະ**

**ເຖິງ: ຜູ້ຖືຮຸ້ນ ແລະ ສະພາຜູ້ບໍລິຫານຂອງ ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ**

**ຄວາມເຫັນ**

ພວກເຮົາມີຄວາມເຫັນວ່າເອກະສານລາຍງານການເງິນຂອງ ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ (ບໍລິສັດ) ສໍາລັບປີສິ້ນສຸດວັນທີ 31 ທັນວາ 2023 ໄດ້ສະແດງສະຖານະທາງການເງິນຂອງບໍລິສັດ ຢ່າງຖືກຕ້ອງ ແລະ ສອດຄ່ອງກັບນະໂຍບາຍການບັນຊີ ເຊິ່ງອະທິບາຍໃນບົດອະທິບາຍຊ້ອນທ້າຍ ຂໍ້ທີ 2 ຂອງເອກະສານລາຍງານສະບັບນີ້.

**ເອກະສານລາຍງານການເງິນທີ່ກວດສອບ**

ເອກະສານລາຍງານການເງິນຂອງບໍລິສັດປະກອບດ້ວຍ:

- ໃບລາຍງານຖານະການເງິນ ວັນທີ 31 ທັນວາ 2023;
- ໃບລາຍງານຜົນໄດ້ຮັບ ສໍາລັບປີສິ້ນສຸດມື້ດຽວກັນ;
- ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ ສໍາລັບປີສິ້ນສຸດມື້ດຽວກັນ;
- ໃບລາຍງານກະແສເງິນສົດ ສໍາລັບປີສິ້ນສຸດມື້ດຽວກັນ; ແລະ
- ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນທີ່ສັງລວມນະໂຍບາຍການບັນຊີທີ່ສໍາຄັນ ແລະ ຂໍ້ມູນອະທິບາຍອື່ນໆ.

**ພື້ນຖານໃນການອອກຄວາມເຫັນ**

ພວກເຮົາໄດ້ດໍາເນີນການກວດສອບ ຕາມມາດຕະຖານການກວດສອບສາກົນ (ISAs). ຄວາມຮັບຜິດຊອບ ຂອງພວກເຮົາພາຍໃຕ້ມາດຕະຖານໄດ້ລະບຸໄວ້ໃນໜ້າທີ່ຮັບຜິດຊອບ ຂອງຜູ້ກວດສອບອິດສະຫຼະ ສໍາລັບການກວດສອບເອກະສານລາຍງານການເງິນ ໃນບົດລາຍງານພວກເຮົາ.

ພວກເຮົາເຊື່ອວ່າຫຼັກຖານການກວດສອບທີ່ພວກເຮົາໄດ້ຮັບພຽງພໍ ແລະ ເໝາະສົມເພື່ອເປັນພື້ນຖານສໍາລັບການອອກຄວາມເຫັນຂອງພວກເຮົາ.

**ຄວາມເປັນອິດສະຫລະ**

ພວກເຮົາມີຄວາມເປັນອິດສະຫຼະ ຈາກບໍລິສັດ ຕາມຂໍ້ກໍານົດຈັນຍາບັນ ຂອງຜູ້ປະກອບວິຊາຊີບນັກບັນຊີ (ລວມເຖິງມາດຕະຖານຄວາມເປັນອິດສະຫຼະສາກົນ) ທີ່ກໍານົດໂດຍຄະນະກໍາມະການຈັນຍາບັນນານາຊາດ ສໍາລັບນັກບັນຊີ (IESBA Code). ພວກເຮົາໄດ້ປະຕິບັດຕາມຄວາມຮັບຜິດຊອບຫຼັກຈັນຍາບັນອື່ນໆ, ທີ່ສອດຄ່ອງກັບຈັນຍາບັນວິຊາຊີບນັກບັນຊີ (IESBA Code).

**ເນັ້ນໜັກໃສ່ໃນເລື່ອງ - ພື້ນຖານ ການບັນຊີ**

ພວກເຮົາໃຫ້ຂໍ້ສັງເກດຕໍ່ກັບບົດອະທິບາຍຊ້ອນທ້າຍທີ 2 ຂອງເອກະສານລາຍງານການເງິນ, ເຊິ່ງໄດ້ອະທິບາຍເຖິງພື້ນຖານການກະກຽມເອກະສານລາຍງານການເງິນ. ເອກະສານລາຍງານການເງິນຖືກສ້າງຂຶ້ນຕາມນະໂຍບາຍການບັນຊີ ຂອງບໍລິສັດ ເຊິ່ງພື້ນຖານການບັນຊີທີ່ຖືກນໍາໃຊ້ໃນການກະກຽມບົດລາຍງານການເງິນສະບັບນີ້ ອາດມີຄວາມແຕກຕ່າງກັບຈາກຫຼັກການບັນຊີຂອງ ມາດຕະຖານການລາຍງານການເງິນສາກົນ ("IFRS"). ດັ່ງນັ້ນ, ຜູ້ທີ່ນໍາໃຊ້ ຄວນມີຄວາມເຂົ້າໃຈວ່າ ເອກະສານລາຍງານການເງິນນີ້ບໍ່ໄດ້ມີຈຸດປະສົງເພື່ອສະແດງຖານະການເງິນ ແລະ ຜົນການດໍາເນີນງານ ແລະ ກະແສເງິນສົດຕາມ IFRS. ທັ້ງນີ້ຄວາມເຫັນຂອງພວກເຮົາບໍ່ໄດ້ມີການປ່ຽນແປງອັນເນື່ອງມາຈາກເລື່ອງທີ່ກ່າວມາຂ້າງເທິງນັ້ນ.

*ບໍລິສັດ ພຣາຍສວໍເຕີເຮົ້າສກູບເປີສ (ລາວ) ຈໍາກັດຜູ້ດຽວ. ຊັ້ນ 4 ອາຄານອາລີອັນສ໌, ອາຄານເລກທີ 33 ຖະໜົນລ້ານຊ້າງ*
*ຕູ້ ປ.ນ 7003, ນະຄອນຫຼວງວຽງຈັນ, ສປປ ລາວ. ໂທ: 856 21 222718/9. www.pwc.com/la*

**ເລື່ອງສຳຄັນໃນການກວດສອບ**

ເລື່ອງສຳຄັນໃນການກວດສອບ ຄື ເລື່ອງຕ່າງໆທີ່ມີຄວາມສຳຄັນທີ່ສຸດຕາມການປະເມີນໂດຍຄວາມຮູ້ຄວາມສາມາດຂອງພວກເຮົາໃນການກວດສອບເອກະສານລາຍງານການເງິນສຳລັບປີປັດຈຸບັນ. ພວກເຮົາກຳນົດບັນຫາໜຶ່ງທີ່ສຳຄັນໃນການກວດສອບເຊັ່ນ: ສຳຮອງໜີ້ສົງໄສຈະສູນ. ບັນຫາດັ່ງກ່າວນີ້ໄດ້ມາລວມໃນການກວດສອບເອກະສານລາຍງານການເງິນເພື່ອສະແດງຄວາມເຫັນຂອງພວກເຮົາ ພ້ອມນີ້ພວກເຮົາບໍ່ໄດ້ສະແດງຄວາມເຫັນແຍກຕ່າງຫາກສຳລັບເລື່ອງເຫຼົ່ານີ້.

| ເລື່ອງສຳຄັນໃນການກວດສອບ | ວິທີການກວດສອບ |
|---|---|
| ສຳຮອງໜີ້ສົງໄສຈະເສຍ<br><br>ໃນວັນທີ 31 ທັນວາ 2023, ຍອດລູກໜີ້ສິນເຊື່ອຜ່ອນຊຳລະເທົ່າກັບ 93 ຕື້ກີບ ກວມເອົາ 9% ຂອງຊັບສິນທັງໝົດ. ບໍລິສັດໄດ້ຕັ້ງສຳຮອງໜີ້ສົງໄສຈະເສຍ 7,7 ຕື້ກີບ ສຳລັບຍອດລູກໜີ້ສິນເຊື່ອຜ່ອນຊຳລະ ເຊິ່ງກວມເອົາ 8,27% ຂອງຍອດລູກໜີ້ສິນເຊື່ອຜ່ອນຊຳລະ.<br><br>ບໍລິສັດມີນະໂຍບາຍກ່ຽວກັບການປະເມີນລູກໜີ້ສິນເຊື່ອຜ່ອນຊຳລະ ແລະ ການກຳນົດຄ່າສຳຮອງໜີ້ສົງໄສຈະເສຍຢ່າງເໝາະສົມ. ຜູ້ບໍລິຫານໄດ້ເອົາໃຈໃສ່ຕໍ່ກັບລູກໜີ້ສິນເຊື່ອຜ່ອນຊຳລະທີ່ເກີນກຳນົດແຕ່ຍັງບໍ່ທັນໄດ້ຮັບພາຍຫຼັງປີສິ້ນສຸດ ແລະ ການປະເມີນຄ່າສຳຮອງໜີ້ສົງໄສຈະເສຍ ແມ່ນອີງໃສ່ແຈ້ງການ ເລກທີ 512/ທຫລ ຂອງທະນາຄານແຫ່ງ ສປປ ລາວ (ທຫລ).<br><br>ພວກເຮົາໄດ້ເອົາໃຈໃສ່ຕໍ່ປະເດັນນີ້ ເນື່ອງຍອດລູກໜີ້ສິນເຊື່ອຜ່ອນຊຳລະແມ່ນມີສາລະສຳຄັນ ແລະ ຄ່າສຳຮອງໜີ້ສົງໄສຈະເສຍແມ່ນການປະມານການທາງບັນຊີ. ການຄາດຄະເນທາງບັນຊີແມ່ນປະຕິບັດຕາມລະບຽບຂອງທະນາຄານແຫ່ງ ສປປ ລາວ. | ພວກເຮົາປະຕິບັດຕາມຂັ້ນຕອນດັ່ງຕໍ່ໄປນີ້:<br><br>• ທຳຄວາມເຂົ້າໃຈກ່ຽວກັບນະໂຍບາຍ, ຂະບວນການ, ວິທີການ ແລະ ສົມມຸດຕິຖານ ທີ່ໃຊ້ເຂົ້າໃນການຄາດຄະເນໜີ້ສົງໄສຈະເສຍ, ແລະ ການລ້າງໜີ້ສູນເພື່ອພິສູດວ່ານະໂຍບາຍການບັນຊີເຫຼົ່ານີ້ແມ່ນສອດຄ່ອງກັບປີທີ່ແລ້ວ;<br>• ທຳການວິເຄາະເພື່ອສະໜັບສະໜູນຍອດເຫຼືອຂອງ ຄ່າສຳຮອງໜີ້ສົງໄສຈະເສຍດ້ວຍການກະທົບຍອດ ແລະ ຄຳນວນຄວາມຖືກຕ້ອງຂອງຕົວເລກ;<br>• ການປະເມີນຄວາມສົມເຫດສົມຜົນຂອງ ສົມມຸດຕິຖານ ອີງໃສ່ແຈ້ງການ ເລກທີ 512/ທຫລ ຂອງທະນາຄານແຫ່ງ ສປປ ລາວ (ທຫລ) ທີ່ໃຊ້ໃນການວິເຄາະລາຍລະອຽດທີ່ສະໜັບສະໜູນການຕັ້ງຄ່າສຳຮອງໜີ້ສົງໄສຈະເສຍ;<br>• ທົດສອບຄວາມໜ້າເຊື່ອຖືໂດຍລະອຽດ ຂອງບົດລາຍງານລູກໜີ້ສິນເຊື່ອຜ່ອນຊຳລະ ທີ່ຈະໃຊ້ເພື່ອປະເມີນຄ່າສຳຮອງໜີ້ສົງໄສຈະເສຍ;<br>• ທົດສອບຕາຕະລາງການເຄື່ອນໄຫວ ຂອງຄ່າສຳຮອງໜີ້ສົງໄສຈະເສຍ ເຊິ່ງລວມມີຍອດຍົກມາ, ການຕັດໜີ້ສູນອອກ, ການສຳຮອງເພີ່ມເຕີມ ແລະ ຍອດເຫຼືອທ້າຍປີ ແລະ ທົດສອບຄວາມຖືກຕ້ອງຂອງການຄຳນວນ;<br>• ພິຈາລະນາ ວ່າມີການຕັດໜີ້ສູນເກີດຂຶ້ນໃນລະຫວ່າງປີອອກ ແລະ ເບິ່ງວ່າມີປະລິມານທີ່ສູງຜິດປົກກະຕິທີ່ອາດຈະຊີ້ບອກເຖິງທ່າແຮງຂອງຈຳນວນລູກໜີ້ຜ່ອນຊຳລະທີ່ອາດຈະບໍ່ສາມາດເກັບໄດ້ເພີ່ມເຕີມ.<br><br>ຈາກຂັ້ນຕອນທີ່ກ່າວມາຂ້າງເທິງ, ພວກເຮົາພົບວ່າດຸນພິນິດ ແລະ ສົມມຸດຖານຂອງຜູ້ບໍລິຫານກ່ຽວກັບການກຳນົດຄ່າສຳຮອງໜີ້ສົງໄສຈະເສຍແມ່ນສົມເຫດສົມຜົນໂດຍອີງໃສ່ຫຼັກຖານສະໜັບສະໜູນ. |

**ຂໍ້ມູນອື່ນ**

ຜູ້ອຳນວຍການມີຄວາມຮັບຜິດຊອບຕໍ່ຂໍ້ມູນອື່ນໆ. ຂໍ້ມູນອື່ນໆແມ່ນຂໍ້ມູນທີ່ຢູ່ໃນບົດລາຍງານປະຈຳປີ ແຕ່ບໍ່ໄດ້ລວມຢູ່ໃນເອກະສານລາຍງານການເງິນ ແລະ ບົດລາຍງານຂອງຜູ້ກວດສອບທີ່ຢູ່ໃນເອກະສານລາຍງານນັ້ນ. ພວກເຮົາຄາດວ່າຈະໄດ້ຮັບບົດລາຍງານປະຈຳປີ ພາຍຫຼັງວັນທີຂອງບົດລາຍງານຂອງຜູ້ກວດສອບ.

ຄວາມເຫັນຂອງພວກເຮົາຕໍ່ເອກະສານລາຍງານການເງິນບໍ່ຄອບຄຸມເຖິງຂໍ້ມູນອື່ນໆ ແລະ ພວກເຮົາບໍ່ໄດ້ໃຫ້ຄວາມເຊື່ອໝັ້ນຕໍ່ຂໍ້ມູນເຫຼົ່ານັ້ນ.

ໃນການກວດສອບເອກະສານລາຍງານການເງິນ ຂອງພວກເຮົາ, ຄວາມຮັບຜິດຊອບ ຂອງພວກເຮົາຄືການອ່ານ ແລະ ພິຈາລະນາວ່າຂໍ້ມູນອື່ນໆມີຄວາມຂັດແຍ່ງທີ່ເປັນສາລະສຳຄັນຕໍ່ກັບເອກະສານລາຍງານການເງິນ ຫຼື ຕໍ່ກັບຄວາມຮູ້ທີ່ໄດ້ຮັບຈາກການກວດສອບ ຂອງພວກເຮົາ ຫຼື ເຫັນວ່າຂໍ້ມູນອື່ນມີການສະແດງຂໍ້ມູນທີ່ຂັດຕໍ່ຄວາມເປັນຈິງທີ່ເປັນສາລະສຳຄັນ ຫຼື ບໍ່.

ຫາກພວກເຮົາພົບວ່າມີການສະແດງຂໍ້ມູນທີ່ຜິດຕໍ່ຄວາມເປັນຈິງໃນບົດລາຍງານປະຈຳປີ, ພວກເຮົາຕ້ອງໄດ້ແຈ້ງປະເດັນດັ່ງກ່າວໃຫ້ຄະນະກຳມະການກວດສອບຮັບຊາບ.

**ຄວາມຮັບຜິດຊອບ ຂອງຜູ້ອຳນວຍການ ຕໍ່ເອກະສານລາຍງານການເງິນ**

ຜູ້ອຳນວຍການມີຄວາມຮັບຜິດຊອບສຳລັບການກະກຽມເອກະສານລາຍງານການເງິນ ແລະ ນຳສະເໜີໂດຍສອດຄ່ອງກັບຫຼັກການບັນຊີ ດັ່ງທີ່ໄດ້ອະທິບາຍໄວ້ໃນບົດອະທິບາຍຊ້ອນທ້າຍຂໍ້ທີ 2 ຂອງເອກະສານລາຍງານການເງິນນີ້ ແລະ ການຄວບຄຸມພາຍໃນ ເຊິ່ງຜູ້ບໍລິຫານໄດ້ກຳນົດໄວ້ຢ່າງພຽງພໍ ເພື່ອສ້າງເອກະສານລາຍງານການເງິນ ທີ່ປາສະຈາກການສະແດງຂໍ້ມູນຜິດພາດທີ່ເປັນສາລະສຳຄັນ ບໍ່ວ່າເນື່ອງມາຈາກການສໍ້ໂກງ ຫຼື ຂໍ້ຜິດພາດ.

ໃນການກະກຽມເອກະສານລາຍງານການເງິນ, ຜູ້ອຳນວຍການມີຄວາມຮັບຜິດຊອບໃນການປະເມີນຄວາມສາມາດ ຂອງບໍລິສັດ ໃນການດຳເນີນງານຢ່າງຕໍ່ເນື່ອງ, ເປີດເຜີຍເລື່ອງທີ່ກ່ຽວຂ້ອງກ່ຽວກັບການດຳເນີນງານຕໍ່ເນື່ອງ ຕາມຄວາມເໝາະສົມ ແລະ ການໃຊ້ພື້ນຖານບັນຊີສຳລັບການດຳເນີນງານຢ່າງຕໍ່ເນື່ອງ. ຍົກເວັ້ນ ຜູ້ອຳນວຍການມີຄວາມຕັ້ງໃຈທີ່ຈະຍຸບບໍລິສັດ ຫຼື ບໍ່ສາມາດດຳເນີນງານຢ່າງຕໍ່ເນື່ອງໄດ້.

ຄະນະກຳມະການກວດສອບໄດ້ຊ່ວຍຜູ້ອຳນວຍການ ໃນເລື່ອງຄວາມຮັບຜິດຊອບ ຂອງພວກເຂົາຕໍ່ກັບຂັ້ນຕອນໃນການກຽມບົດລາຍງານການເງິນ.

**ຄວາມຮັບຜິດຊອບຂອງຜູ້ກວດສອບ ຕໍ່ເອກະສານລາຍງານການເງິນ**

ວັດຖຸປະສົງ ຂອງພວກເຮົາແມ່ນເພື່ອໃຫ້ຄວາມເຊື່ອໝັ້ນຢ່າງສົມເຫດສົມຜົນວ່າເອກະສານລາຍງານການເງິນໂດຍລວມ ປາສະຈາກການສະແດງຂໍ້ມູນຜິດພາດທີ່ເປັນສາລະສຳຄັນ, ບໍ່ວ່າເນື່ອງຈາກການສໍ້ໂກງ ຫຼື ຂໍ້ຜິດພາດ ແລະ ສະເໜີຄວາມເຫັນຂອງພວກເຮົາຕໍ່ເອກະສານລາຍງານການເງິນ ເຊິ່ງລວມຄວາມເຫັນຂອງຜູ້ກວດສອບ. ຄວາມເຊື່ອໝັ້ນຢ່າງສົມເຫດສົມຜົນ ຄືຄວາມເຊື່ອໝັ້ນໃນລະດັບສູງແຕ່ບໍ່ໄດ້ເປັນການຮັບປະກັນວ່າການດຳເນີນການກວດສອບຕາມມາດຕະຖານການກວດສອບບັນຊີສາກົນຈະສາມາດກວດພົບ ຫຼື ປ້ອງກັນການສະແດງຂໍ້ມູນທີ່ຂັດຕໍ່ຄວາມເປັນຈິງທີ່ເປັນສາລະສຳຄັນສະເໝີໄປ, ຂໍ້ມູນທີ່ຂັດຕໍ່ຄວາມເປັນຈິງອາດເກີດຈາກການສໍ້ໂກງ ຫຼື ຂໍ້ຜິດພາດ ແລະ ຖືວ່າເປັນສາລະສຳຄັນ ເມື່ອຄາດການຢ່າງສົມເຫດສົມຜົນໄດ້ວ່າລາຍການຂໍ້ມູນທີ່ຂັດຕໍ່ຄວາມເປັນຈິງແຕ່ລະລາຍການ ຫຼື ທຸກລາຍການລວມກັນມີຜົນຕໍ່ການຕັດສິນໃຈທາງເສດຖະກິດຕໍ່ຜູ້ໃຊ້ເອກະສານລາຍງານການເງິນເຫຼົ່ານີ້.

ໃນການກວດສອບຂອງພວກເຮົາອີງຕາມມາດຕະຖານການກວດສອບບັນຊີສາກົນ, ພວກເຮົາໄດ້ໃຊ້ການປະເມີນຕາມຫຼັກວິຊາຊີບທີ່ຄວນຈະມີຕະຫຼອດການກວດສອບ, ການດຳເນີນງານຂອງພວກເຮົາລວມມີ:

- ການລະບຸ ແລະ ການປະເມີນຄວາມສ່ຽງຂອງການລາຍງານຜິດພາດທີ່ເປັນສາລະສຳຄັນຂອງເອກະສານລາຍງານການເງິນ ເນື່ອງຈາກການສໍ້ໂກງ ຫຼື ຂໍ້ຜິດພາດ. ການວາງແຜນ ແລະ ການດຳເນີນງານຕາມວິທີການກວດສອບເພື່ອຕອບສະໜອງຕໍ່ຄວາມສ່ຽງເຫຼົ່ານັ້ນ ແລະ ຫຼັກຖານທີ່ໄດ້ຈາກການກວດສອບ ທີ່ພວກເຮົາໄດ້ຮັບ ແມ່ນພຽງພໍ ແລະ ເໝາະສົມເພື່ອເປັນພື້ນຖານສຳລັບການສະແດງຄຳເຫັນຂອງພວກເຮົາ. ຄວາມສ່ຽງທີ່ຈະບໍ່ພົບຂໍ້ມູນທີ່ຜິດພາດ ແລະ ເປັນສາລະສຳຄັນ ເຊິ່ງເກີດຈາກການສໍ້ໂກງມີສູງກວ່າຄວາມສ່ຽງທີ່ເກີດຈາກຂໍ້ຜິດພາດ, ເນື່ອງຈາກການສໍ້ໂກງອາດເກີດຈາກການສົມຮູ້ຮ່ວມຄິດປອມແປງເອກະສານຫຼັກຖານ, ການຕັ້ງໃຈລະເວັ້ນທີ່ຈະສະແດງຂໍ້ມູນທີ່ບໍ່ຖືກຕ້ອງຕາມຄວາມເປັນຈິງ ຫຼື ການເຂົ້າແຊກແຊງການຄວບຄຸມພາຍໃນ.
- ທຳຄວາມເຂົ້າໃຈ ແລະ ປະເມີນປະສິດທິພາບຂອງລະບົບການຄວບຄຸມພາຍໃນທີ່ກ່ຽວຂ້ອງກັບການກວດສອບ ເພື່ອກຳນົດຂັ້ນຕອນໃນການກວດສອບທີ່ແທດເໝາະກັບສະພາບຕົວຈິງ, ແຕ່ບໍ່ມີຈຸດປະສົງເພື່ອສະແດງຄວາມເຫັນກ່ຽວກັບ ປະສິດທິຜົນຂອງການຄວບຄຸມພາຍໃນຂອງບໍລິສັດ.
- ປະເມີນຄວາມເໝາະສົມຂອງການນຳໃຊ້ນະໂຍບາຍການບັນຊີ ແລະ ຄວາມສົມເຫດສົມຜົນຂອງການຄາດຄະເນທາງບັນຊີ ລວມທັງການເປີດເຜີຍຂໍ້ມູນທີ່ກ່ຽວຂ້ອງທີ່ສ້າງຂຶ້ນໂດຍຜູ້ອຳນວຍການ.
- ສະຫລຸບກ່ຽວກັບຄວາມເໝາະສົມຂອງການໃຊ້ພື້ນຖານບັນຊີສຳລັບການດຳເນີນງານຢ່າງຕໍ່ເນື່ອງຂອງຜູ້ອຳນວຍການ ແລະ ຫຼັກຖານການກວດສອບທີ່ໄດ້ຮັບວ່າບໍ່ມີຄວາມແນ່ນອນທີ່ມີສາລະສຳຄັນ ທີ່ກ່ຽວກັບເຫດການ ຫຼື ສະພາບຕົວຈິງທີ່ອາດມີປັດໃຈໃຫ້ເກີດຂໍ້ສົງໄສຢ່າງທີ່ມີສາລະສຳຄັນຕໍ່ຄວາມສາມາດໃນການດຳເນີນງານຢ່າງຕໍ່ເນື່ອງຂອງບໍລິສັດ ຫຼື ບໍ່, ຖ້າພວກເຮົາສະຫຼຸບໄດ້ວ່າຄວາມບໍ່ແນ່ນອນທີ່ມີສາລະສຳຄັນ ພວກເຮົາຕ້ອງບັນທຶກໃນບົດລາຍງານຂອງຜູ້ກວດສອບຂອງພວກເຮົາທີ່ໄດ້ເປີດເຜີຍກ່ຽວກັບເອກະສານລາຍງານການເງິນເຊິ່ງການເປີດເຜີຍດັ່ງກ່າວບໍ່ພຽງພໍທີ່ຈະເຮັດໃຫ້ ຄວາມເຫັນຂອງພວກເຮົາຈະປ່ຽນແປງໄປ. ຂໍ້ສະຫຼຸບຂອງພວກເຮົາຂຶ້ນຢູ່ກັບຫຼັກຖານການກວດສອບທີ່ໄດ້ຮັບຈົນເຖິງວັນທີ່ໃນບົດລາຍງານຂອງພວກເຮົາ. ເຖິງຢ່າງໃດກໍຕາມ, ເຫດການ ຫຼື ສະພາບຕົວຈິງໃນອະນາຄົດອາດເປັນສາເຫດໃຫ້ບໍລິສັດບໍ່ສາມາດດຳເນີນງານຢ່າງຕໍ່ເນື່ອງໄດ້.

ພວກເຮົາໄດ້ສື່ສານກັບຄະນະກຳມະການການກວດສອບກ່ຽວກັບຂອບເຂດ ແລະ ຊ່ວງເວລາຂອງການກວດສອບຕາມທີ່ໄດ້ວາງແຜນໄວ້. ເຊິ່ງລວມເຖິງບັນຫາທີ່ສຳຄັນທີ່ພົບເຫັນໃນການກວດສອບ ແລະ ຂໍ້ບົກພ່ອງຂອງການຄວບຄຸມພາຍໃນທີ່ເປັນສາລະສຳຄັນ ທີ່ພົບລະຫວ່າງການກວດສອບຂອງພວກເຮົາ.

ພວກເຮົາໄດ້ໃຫ້ຄຳຮັບຮອງແກ່ຄະນະກຳມະການກວດສອບວ່າ ພວກເຮົາໄດ້ປະຕິບັດຕາມຂໍ້ກຳນົດຫລັກຈັນຍາບັນກ່ຽວຂ້ອງກັບຄວາມເປັນອິດສະຫຼະ ແລະ ໄດ້ສື່ສານກັບຄະນະກຳມະການກວດສອບກ່ຽວກັບຄວາມສຳພັນທັງໝົດ ລວມເຖິງເລື່ອງອື່ນທີ່ພວກເຮົາເຊື່ອວ່າມີເຫດຜົນທີ່ອາດພິຈາລະນາເຖິງຜົນກະທົບຕໍ່ຄວາມເປັນອິດສະຫຼະ ຂອງພວກເຮົາ ແລະ ຫລັກການທີ່ພວກເຮົາໃຊ້ເພື່ອປ້ອງກັນການຂາດຄວາມເປັນອິດສະຫຼະ.

ຈາກເລື່ອງທີ່ສື່ສານກັບຄະນະກຳມະການກວດສອບ ພວກເຮົາໄດ້ພິຈາລະນາເລື່ອງຕ່າງໆທີ່ເປັນສາລະສຳຄັນ ທີ່ສຸດໃນການກວດສອບເອກະສານລາຍງານການເງິນຄັ້ງນີ້ ແລະ ກຳນົດເປັນເລື່ອງສຳຄັນໃນການກວດສອບ. ພວກເຮົາໄດ້ອະທິບາຍເລື່ອງເຫຼົ່ານີ້ໃນບົດລາຍງານຂອງຜູ້ກວດສອບ. ຍົກເວັ້ນກົດໝາຍ ຫຼື ຂໍ້ບັງຄັບບໍ່ໃຫ້ເປີດເຜີຍຕໍ່ສາທາລະນະກ່ຽວກັບເລື່ອງດັ່ງກ່າວ ຫຼື ໃນສະພາບການທີ່ຍາກຈະເກີດຂຶ້ນ ພວກເຮົາພິຈາລະນາວ່າບໍ່ຄວນສື່ສານເລື່ອງດັ່ງກ່າວໃນບົດລາຍງານຂອງພວກເຮົາ ເພາະການປະຕິບັດດັ່ງກ່າວສາມາດຄາດການໄດ້ຢ່າງສົມເຫດສົມຜົນວ່າຈະມີຜົນກະທົບໃນທາງລົບຫຼາຍກວ່າຜົນປະໂຫຍດ ຕໍ່ສ່ວນໄດ້ເສຍສາທາລະນະຈາກການສື່ສານດັ່ງກ່າວ.

ບໍລິສັດ ພຣາຍສວໍເຕີເຮົ້າສກູບເປີສ (ລາວ) ຈຳກັດຜູ້ດຽວ.

ໂດຍ: ອະພິສິດ ທ່ຽງຕົງພົນໂຍ
ຮຸ້ນສ່ວນ

ນະຄອນຫຼວງວຽງຈັນ, ສປປ ລາວ
ວັນທີ: 20 ກຸມພາ 2024

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ

**ໃບລາຍງານຖານະການເງິນ**
**ໃນວັນທີ 31 ທັນວາ 2023**

| | ບົດ ອະທິບາຍ | 2023 ກີບ | 2022 ກີບ |
|---|---|---|---|
| **ຊັບສິນ** | | | |
| **ຊັບສິນໝູນວຽນ** | | | |
| ເງິນສົດ ແລະ ລາຍການທຽບເທົ່າເງິນສົດ | 3 | 904.775.929.399 | 6.679.159.473 |
| ສັດສ່ວນໝູນວຽນຂອງໜີ້ຕ້ອງຮັບສັນຍາເຊົ່າການເງິນ ແລະ ລູກໜີ້ສິນເຊື່ອຜ່ອນຊໍາລະ, ສຸດທິ | 4 | 63.329.837.434 | 56.170.138.344 |
| ຊັບສິນຖືໄວ້ເພື່ອຂາຍ, ສຸດທິ | 5 | 155.406.395 | 261.652.873 |
| ຊັບສິນໝູນວຽນອື່ນໆ | 6 | 1.656.496.861 | 676.742.783 |
| **ລວມຊັບສິນໝູນວຽນ** | | **969.917.670.089** | **63.787.693.473** |
| **ຊັບສິນບໍ່ໝູນວຽນ** | | | |
| ເງິນຝາກຄໍ້າປະກັນເງິນກູ້ | 7 | 2.000.000.000 | 2.000.000.000 |
| ເງິນຝາກທີ່ທະນາຄານແຫ່ງ ສປປ ລາວ | 8 | 2.000.002.700 | 2.000.002.700 |
| ໜີ້ຕ້ອງຮັບຈາກສັນຍາເຊົ່າການເງິນ ແລະ ລູກໜີ້ສິນເຊື່ອຜ່ອນຊໍາລະ, ສຸດທິ | 4 | 22.893.804.241 | 40.436.766.879 |
| ຊັບສິນຄົງທີ່ມີຕົວຕົນ, ສຸດທິ | 9 | 719.445.435 | 649.599.179 |
| ຊັບສິນຄົງທີ່ບໍ່ມີຕົວຕົນ, ສຸດທິ | 10 | 52.921.342 | 129.298.349 |
| ຊັບສິນບໍ່ໝູນວຽນ ອື່ນໆ | | 7.647.059 | 57.683.513 |
| **ລວມຊັບສິນບໍ່ໝູນວຽນ** | | **27.673.820.777** | **45.273.350.620** |
| **ລວມຊັບສິນ** | | **997.591.490.866** | **109.061.044.093** |

ທ່ານ ມານິບ ຕຣີລິດວິໄລ
ຜູ້ອໍານວຍການໃຫຍ່

ວັນທີ: 20 ກຸມພາ 2024

ທ່ານ ນາງ ສຸກພາພອນ ທອງໄພບູນ
ຜູ້ອໍານວຍການຝ່າຍການເງິນ

ວັນທີ: 20 ກຸມພາ 2024

ບົດອະທິບາຍຊ້ອນທ້າຍ ແຕ່ໜ້າທີ 12 - 27 ແມ່ນສ່ວນໜຶ່ງ ຂອງເອກະສານລາຍງານການເງິນສະບັບນີ້.

**ໃບລາຍງານຖານະການເງິນ**
**ໃນວັນທີ 31 ທັນວາ 2023**

| | ບົດ ອະທິບາຍ | 2023 ກີບ | 2022 ກີບ |
|---|---|---|---|
| **ໜີ້ສິນ ແລະ ທຶນເຈົ້າຂອງ** | | | |
| **ໜີ້ສິນ** | | | |
| **ໜີ້ສິນໝູນວຽນ** | | | |
| ໜີ້ຕ້ອງສົ່ງທາງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ | 11 | 6.968.095.441 | 3.586.598.484 |
| ໜີ້ຕ້ອງສົ່ງອາກອນລາຍໄດ້ | | 713.016.274 | 2.541.872.732 |
| ເງິນກູ້ຢືມໄລຍະສັ້ນ ແລະ ຊັດສ່ວນໝູນວຽນເງິນກູ້ໄລຍະຍາວ | 12 | 908.805.460.751 | 22.429.331.514 |
| ໜີ້ສິນໝູນວຽນອື່ນໆ | | 50.616.491 | 46.335.134 |
| **ລວມໜີ້ສິນໝູນວຽນ** | | **916.537.188.957** | **28.604.137.864** |
| **ໜີ້ສິນບໍ່ໝູນວຽນ** | | | |
| ເງິນກູ້ຢືມ | 12 | 625.359.032 | 9.330.019.783 |
| ໜີ້ສິນບໍ່ໝູນວຽນອື່ນໆ | | 193.075.000 | 207.575.000 |
| **ລວມໜີ້ສິນບໍ່ໝູນວຽນ** | | **818.434.032** | **9.537.594.783** |
| **ລວມໜີ້ສິນ** | | **917.355.622.989** | **38.141.732.647** |
| **ທຶນເຈົ້າຂອງ** | | | |
| ທຶນຈົດທະບຽນ | 14 | 40.000.000.000 | 40.000.000.000 |
| ສ່ວນເພີ່ມມູນຄ່າຮຸ້ນ | | 12.832.667.550 | 12.832.667.550 |
| ກຳໄລສະສົມ | | | |
| ຄັງສະສົມຕາມລະບຽບການ | 15 | 5.822.252.913 | 4.890.597.270 |
| ກຳໄລສະສົມ ທີ່ຍັງບໍ່ໄດ້ຈັດສັນ | | 21.580.947.414 | 13.196.046.626 |
| **ລວມທຶນເຈົ້າຂອງ** | | **80.235.867.877** | **70.919.311.446** |
| **ລວມໜີ້ສິນ ແລະ ທຶນເຈົ້າຂອງ** | | **997.591.490.866** | **109.061.044.093** |

ທ່ານ ມານົບ ຕຣີລິດວິໄລ
ຜູ້ອຳນວຍການໃຫຍ່

ວັນທີ: 20 ກຸມພາ 2024

ທ່ານ ນາງ ສຸກພາພອນ ທອງໄພບຸນ
ຜູ້ອຳນວຍການຝ່າຍການເງິນ

ວັນທີ: 20 ກຸມພາ 2024

ບົດອະທິບາຍຊ້ອນທ້າຍ ແຕ່ໜ້າທີ 12 - 27 ແມ່ນສ່ວນໜຶ່ງ ຂອງເອກະສານລາຍງານການເງິນສະບັບນີ້.

**ໃບລາຍງານຜົນໄດ້ຮັບ**
**ສໍາລັບປີສິ້ນສຸດວັນທີ 31 ທັນວາ 2023**

| | ບົດ ອະທິບາຍ | 2023 ກີບ | 2022 ກີບ |
|---|---|---|---|
| ລາຍຮັບຈາກດອກເບ້ຍ - ສັນຍາເຊົ່າການເງິນ ແລະ ສິນເຊື່ອຜ່ອນຊໍາລະ, ສຸດທິ | | 36.041.853.654 | 31.447.152.868 |
| **ລວມລາຍຮັບ** | | **36.041.853.654** | **31.447.152.868** |
| ລາຍຮັບອື່ນ | 18 | 7.600.202.754 | 2.278.238.198 |
| ລາຍຈ່າຍໃນການບໍລິຫານ | 19 | (20.884.342.777) | (15.234.317.361) |
| ໜີ້ເສຍ ແລະ ໜີ້ຕ້ອງຮັບທວງຍາກ | | (1.942.572.665) | (1.533.508.205) |
| ຂາດທຶນສຸດທິຈາກອັດຕາແລກປ່ຽນ | | (3.147.522.970) | (9.685.056.881) |
| **ກໍາໄລຈາກການດໍາເນີນງານ** | | **17.667.617.996** | **7.272.508.619** |
| ລາຍຈ່າຍການເງິນ | 20 | (7.594.045.291) | (3.582.984.255) |
| **ກໍາໄລສຸດທິກ່ອນອາກອນ** | | **10.073.572.705** | **3.689.524.364** |
| ລາຍຈ່າຍອາກອນ | 21 | (757.016.274) | (2.641.872.732) |
| **ກໍາໄລສຸດທິ** | | **9.316.556.431** | **1.047.651.632** |
| **ກໍາໄລ ຕໍ່ຮຸ້ນ** | | | |
| ກໍາໄລພື້ນຖານຕໍ່ຮຸ້ນ | 16 | 23,29 | 2,62 |

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ MAHATHUEN LEASING PUBLIC COMPANY

ທ່ານ ມານິບ ຕຣີລິດວິໄລ
ຜູ້ອໍານວຍການໃຫຍ່

ວັນທີ: 20 ກຸມພາ 2024

ທ່ານ ນາງ ສຸກພາພອນ ທອງໄພບຸນ
ຜູ້ອໍານວຍການຝ່າຍການເງິນ

ວັນທີ: 20 ກຸມພາ 2024

ບົດອະທິບາຍຊ້ອນທ້າຍ ແຕ່ໜ້າທີ 12 - 27 ແມ່ນສ່ວນໜຶ່ງ ຂອງເອກະສານລາຍງານການເງິນສະບັບນີ້.

**ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ**
**ສໍາລັບປີສິ້ນສຸດວັນທີ 31 ທັນວາ 2023**

| | ບົດ ອະທິບາຍ | ທຶນຈົດທະບຽນ ກີບ | ສ່ວນເພີ່ມມູນຄ່າຮຸ້ນ ກີບ | ກໍາໄລສະສົມ: ຄັງສະສົມຕາມ ລະບຽບການຈັດສັນແລ້ວ ກີບ | ກໍາໄລສະສົມ: ກໍາໄລສະສົມ ທີ່ຍັງບໍ່ໄດ້ຈັດສັນ ກີບ | ລວມ ກີບ |
|---|---|---|---|---|---|---|
| ໃນວັນທີ 1 ມັງກອນ 2022 | | 40.000.000.000 | 12.832.667.550 | 4.785.832.107 | 14.533.160.157 | 72.151.659.814 |
| ກໍາໄລສໍາລັບປີ | | - | - | - | 1.047.651.632 | 1.047.651.632 |
| ການຈັດສັນເງິນສໍາຮອງຕາມລະບຽບການ | | - | - | 104.765.163 | (104.765.163) | - |
| ຈ່າຍເງິນປັນຜົນ | 17 | - | - | - | (2.280.000.000) | (2.280.000.000) |
| **ໃນວັນທີ 31 ທັນວາ 2022** | | **40.000.000.000** | **12.832.667.550** | **4.890.597.270** | **13.196.046.626** | **70.919.311.446** |
| ໃນວັນທີ 1 ມັງກອນ 2023 | | 40.000.000.000 | 12.832.667.550 | 4.890.597.270 | 13.196.046.626 | 70.919.311.446 |
| ກໍາໄລສໍາລັບປີ | | | | | 9.316.556.431 | 9.316.556.431 |
| ການຈັດສັນເງິນສໍາຮອງຕາມກົດໝາຍ | | | | 931.655.643 | (931.655.643) | - |
| **ໃນວັນທີ 31 ທັນວາ 2023** | | **40.000.000.000** | **12.832.667.550** | **5.822.252.913** | **21.580.947.414** | **80.235.867.877** |

ທ່ານ ມານົບ ຕຣີລົດວິໄລ
ຜູ້ອໍານວຍການໃຫຍ່

ວັນທີ: 20 ກຸມພາ 2024

ທ່ານ ນາງ ສຸກພາພອນ ທອງໄພບູນ
ຜູ້ອໍານວຍການຝ່າຍການເງິນ

ວັນທີ: 20 ກຸມພາ 2024

ບົດອະທິບາຍຊ້ອນທ້າຍ ແຕ່ໜ້າທີ 12 - 27 ແມ່ນສ່ວນໜຶ່ງ ຂອງເອກະສານລາຍງານການເງິນສະບັບນີ້.

ບໍລິສັດ ມະຫາທຶນ ເຊົ່າສິນເຊື່ອ ມະຫາຊົນ

**ໃບລາຍງານກະແສເງິນສົດ**
**ສຳລັບປີສິ້ນສຸດວັນທີ 31 ທັນວາ 2023**

| | ບົດ ອະທິບາຍ | 2023 ກີບ | 2022 ກີບ |
|---|---|---|---|
| **ກະແສເງິນສົດຈາກກິດຈະກຳການດຳເນີນງານ:** | | | |
| ກຳໄລກ່ອນອາກອນ | | 10.073.572.705 | 3.689.524.364 |
| ດັດແກ້ເພື່ອສົມທຽບກຳໄລສຸດທິ ແລະ ເງິນສົດສຸດທິ | | | |
| ໜີ້ສົງໄສຈະເສຍ ແລະ ໜີ້ສູນ | | 1.942.572.665 | 1.533.508.205 |
| ຄ່ານາຍໜ້າລໍຖ້າຕັດບັນຊີ | | 2.266.698.042 | 3.701.505.513 |
| ຂາດທຶນຈາກການສະສາງຊັບສົມບັດຄົງທີ | 9 | 1.572.979 | 132.252 |
| ຂາດທຶນຈາກການສູນເສຍມູນຄ່າຂອງຊັບສິນລໍຖ້າຂາຍ | | (7.500.000) | (8.750.000) |
| ຄ່າຫຼຸ້ຍຫ້ຽນ | 9 , 10 | 404.752.772 | 530.705.258 |
| ລາຍຈ່າຍການເງິນ | | 7.594.045.291 | 3.582.984.255 |
| ຂາດທຶນຈາກອັດຕາແລກປ່ຽນ | | (6.280.991.341) | 9.530.339.018 |
| **ກຳໄລຈາກການດຳເນີນງານກ່ອນການປ່ຽນແປງທຶນໝູນວຽນ** | | **15.994.723.113** | **22.559.948.865** |
| **ການປ່ຽນແປງທຶນໝູນວຽນ:** | | | |
| ໜີ້ຕ້ອງຮັບຈາກສັນຍາເຊົ່າທາງການເງິນ ແລະ ລູກໜີ້ສິນເຊື່ອຜ່ອນຊຳລະ | | 6.948.859.579 | (18.408.519.569) |
| ຊັບສິນຖືໄວ້ເພື່ອຂາຍ | | 113.746.478 | 9.883.461 |
| ຊັບສິນໝູນວຽນ ແລະ ບໍ່ໝູນວຽນອື່ນໆ | | (929.717.624) | (56.833.863) |
| ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ | | 480.911.701 | (994.153.860) |
| ໜີ້ສິນໝູນວຽນອື່ນໆ | | (1.825.482.548) | (29.705.781) |
| ໜີ້ສິນບໍ່ໝູນວຽນອື່ນໆ | | (14.500.000) | (9.675.000) |
| **ເງິນສົດຈາກກິດຈະກຳດຳເນີນງານ** | | **20.768.540.699** | **3.070.944.253** |
| ລາຍຈ່າຍຄ່ານາຍໜ້າ | | (660.300.000) | (3.495.398.560) |
| ລາຍຈ່າຍດອກເບ້ຍ | | (2.864.603.577) | (3.551.952.082) |
| ລາຍຈ່າຍອາກອນ | | (2.585.872.732) | (2.141.935.197) |
| **ເງິນສົດສຸດທິຈາກ/(ໃຊ້ໃນ)ກິດຈະກຳດຳເນີນງານ** | | **14.657.764.390** | **(6.118.341.587)** |

ທ່ານ ມານິບ ຕຣີລົດວິໄລ
ຜູ້ອຳນວຍການໃຫຍ່

ວັນທີ: 20 ກຸມພາ 2024

ທ່ານ ນາງ ສຸກພາພອນ ທອງໄພບຸນ
ຜູ້ອຳນວຍການຝ່າຍການເງິນ

ວັນທີ: 20 ກຸມພາ 2024

ບົດອະທິບາຍຊ້ອນທ້າຍ ແຕ່ໜ້າທີ 12 - 27 ແມ່ນສ່ວນໜຶ່ງ ຂອງເອກະສານລາຍງານການເງິນສະບັບນີ້.

## ໃບລາຍງານກະແສເງິນສົດ
## ສຳລັບປີສິ້ນສຸດວັນທີ 31 ທັນວາ 2023

| | ບົດ ອະທິບາຍ | 2023 ກີບ | 2022 ກີບ |
|---|---|---|---|
| **ກະແສເງິນສົດຈາກກິດຈະກຳການລົງທຶນ** | | | |
| ເງິນສົດຈ່າຍຊື້ຊັບສົມບັດຄົງທີ່ມີຕົວຕົນ | 9 | (399.795.000) | (164.571.987) |
| ເງິນຝາກຄ້ຳປະກັນເງິນກູ້ | 7 | - | (2.000.000.000) |
| **ເງິນສົດສຸດທິໃຊ້ໄປໃນກິດຈະກຳການລົງທຶນ** | | **(399.795.000)** | **(2.164.571.987)** |
| **ກະແສເງິນສົດຈາກກິດຈະກຳການເງິນ** | | | |
| ເງິນສົດໄດ້ຮັບຈາກເງິນກູ້ຢືມ | 12 | 828.828.240.000 | 5.000.000.000 |
| ຈ່າຍຄືນເງິນກູ້ຢືມ | 12 | (20.661.971.514) | (995.848.703) |
| ຈ່າຍເງິນປັນຜົນ | 17 | - | (2.280.000.000) |
| **ເງິນສົດສຸດທິຈາກ/(ໃຊ້ໃນ)ກິດຈະກຳການເງິນ** | | **808.166.268.486** | **1.724.151.297** |
| **ເພີ່ມຂຶ້ນ/(ຫຼຸດລົງ)ສຸດທິໃນເງິນສົດ ແລະ ລາຍການທຽບເທົ່າເງິນສົດ** | | 822.424.237.876 | (6.558.762.277) |
| ເງິນສົດ ແລະ ລາຍການທຽບເທົ່າເງິນສົດຕົ້ນປີ | | 6.679.159.473 | 13.057.187.126 |
| ກຳໄລການແລກປ່ຽນຈາກເງິນສົດ ແລະ ລາຍການທຽບເທົ່າເງິນສົດ | | 75.672.532.050 | 180.734.624 |
| **ເງິນສົດ ແລະ ລາຍການທຽບເທົ່າເງິນສົດທ້າຍປີ** | 3 | **904.775.929.399** | **6.679.159.473** |

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ MAHATHUEN LEASING PUBLIC COMPANY

ທ່ານ ມານິບ ດຣີລິດວິໄລ
ຜູ້ອຳນວຍການໃຫຍ່

ວັນທີ: 20 ກຸມພາ 2024

ທ່ານ ນາງ ສຸກພາພອນ ທອງໄພບູນ
ຜູ້ອຳນວຍການຝ່າຍການເງິນ

ວັນທີ: 20 ກຸມພາ 2024

## 1 ຂໍ້ມູນທົ່ວໄປ

ບໍລິສັດ ມະຫາທຶນ ເຊົ່າສິນເຊື່ອ ມະຫາຊົນ (ບໍລິສັດ) ແມ່ນ ບໍລິສັດທີ່ໄດ້ຈົດທະບຽນໃນຕະຫລາດຫຼັກຊັບລາວ ແລະ ທີ່ໄດ້ຈົດທະບຽນ ຕັ້ງຢູ່ໃນ ສປປ ລາວ. ບໍລິສັດໄດ້ຈົດທະບຽນສ້າງຕັ້ງ ກັບກະຊວງອຸດສາຫະກຳ ແລະ ການຄ້າ ໃນວັນທີ 2 ກັນຍາ 2011. ບໍລິສັດໄດ້ເລີ່ມດຳເນີນທຸລະກິດພາຍຫຼັງທີ່ໄດ້ຮັບໃບອະນຸຍາດຈາກທະນາຄານແຫ່ງສປປ ລາວ ໃນວັນທີ 11 ມິຖຸນາ 2012.

ເມື່ອວັນທີ 13 ມິຖຸນາ 2018, ບໍລິສັດ ໄດ້ຮັບອະນຸຍາດຈາກຄະນະກຳມະການຄຸ້ມຄອງຫຼັກຊັບລາວ ໃຫ້ຈຳໜ່າຍຮຸ້ນແກ່ປະຊາຊົນທົ່ວໄປເປັນຄັ້ງທຳອິດ.

ສຳນັກງານໃຫຍ່ຂອງບໍລິສັດ ຕັ້ງຢູ່ເຮືອນເລກທີ 628, ບ້ານໂພນພະເນົາ, ຖະໜົນໄກສອນພົມວິຫານ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ.

ກິດຈະກຳຫຼັກ ຂອງບໍລິສັດແມ່ນການສະໜອງສິນເຊື່ອສຳລັບລູກຄ້າລາຍຍ່ອຍໂດຍການໃຫ້ສິນເຊື່ອແກ່ລູກຄ້າລາຍບຸກຄົນເພື່ອຊື້ລົດຈັກ, ລົດໄຖ ແລະ ຄຳ.

ເອກະສານລາຍງານການເງິນ ໄດ້ມີການອະນຸມັດໃຫ້ອອກບົດລາຍງານ ໂດຍຄະນະບໍລິຫານໃນວັນທີ 20 ກຸມພາ 2024.

## 2 ນະໂຍບາຍການບັນຊີ

ນະໂຍບາຍການບັນຊີ ທີ່ນຳໃຊ້ເຂົ້າໃນການກະກຽມເອກະສານລາຍງານການເງິນສະບັບນີ້ ໄດ້ກຳນົດໄວ້ ດັ່ງລຸ່ມນີ້:

### 2.1 ພື້ນຖານໃນການກະກຽມ

ເອກະສານລາຍງານການເງິນ ໄດ້ມີການກະກຽມຕາມນະໂຍບາຍການບັນຊີ ຂອງບໍລິສັດທີ່ໄດ້ລະບຸໄວ້ ໃນບົດອະທິບາຍຊ້ອນທ້າຍຂໍ້ທີ 2 ຂອງເອກະສານລາຍງານການເງິນສະບັບນີ້ ເຊິ່ງໄດ້ມີການສ້າງຂຶ້ນ ບົນພື້ນຖານຕົ້ນທຶນເດີມ.

ອີງຕາມກົດໝາຍບັນຊີສະບັບເລກທີ 47/ສພຊ ລົງວັນທີ 26 ທັນວາ 2013, ວິສາຫະກິດ ທີ່ຮັບໃຊ້ຜົນປະໂຫຍດສາທາລະນະ (PIEs) ຕ້ອງປະຕິບັດມາດຕະຖານການລາຍງານການເງິນສາກົນ, ເຖິງຢ່າງໃດກໍ່ຕາມ, ກະຊວງການເງິນໄດ້ອອກແຈ້ງການສະບັບເລກທີ 1137/ກງ ລົງວັນທີ 27 ເມສາ 2020 ແລະ ຈາກສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ (LSCO) ລົງວັນທີ 25 ພຶດສະພາ 2020, ຊຶ່ງໃຫ້ທາງເລືອກສຳລັບ PIEs ໃນການຈັດການເຮັດແຜນປະຕິບັດການສຳລັບການນຳໃຊ້ມາດຕະຖານການລາຍງານບັນຊີສາກົນ (IFRS) ຈົນຮອດວັນທີ 31 ທັນວາ 2025 ແລະ 1 ມັງກອນ 2026 ເປັນຕົ້ນໄປ, ບໍລິສັດ ຈົດທະບຽນທັງໝົດຕ້ອງຮັບຮອງເອົາ IFRS ຢ່າງເຕັມສ່ວນ. ຜູ້ບໍລິຫານມີໜ້າທີ່ກະກຽມແຜນການປະຕິບັດການປະຕິບັດ IFRS ໃຫ້ສອດຄ່ອງກັບການປະກາດ.

ຜູ້ບໍລິຫານກຳລັງກະກຽມແຜນປະຕິບັດການ ສຳລັບການດຳເນີນການຕາມ IFRS ຕາມການແຈ້ງການ. ສະນັ້ນຫຼັກການບັນຊີທີ່ນຳໃຊ້ອາດຈະແຕກຕ່າງຢ່າງມີສາລະສຳຄັນ ຈາກບົດລາຍງານການເງິນຕາມມາດຕະຖານການລາຍງານການເງິນສາກົນ (IFRS)

ການກະກຽມເອກະສານລາຍງານການເງິນ ຮຽກຮ້ອງໃຫ້ຝ່າຍບໍລິຫານ ຕ້ອງມີການຄາດຄະເນ ແລະ ກຳນົດຂໍ້ສົມມຸດຖານຫຼາຍປະການ ເພື່ອສະແດງໃຫ້ເຫັນຈຳນວນເງິນຂອງຊັບສິນ ແລະ ໜີ້ສິນ. ການເປີດເຜີຍຂໍ້ມູນ ຊັບສິນ ແລະ ໜີ້ສິນ ທີ່ອາດຈະເກີດຂຶ້ນໃນມື້ກະກຽມເອກະສານລາຍງານການເງິນ ແລະ ລາຍຮັບ ແລະ ລາຍຈ່າຍ ໃນຮອບເວລາລາຍງານ. ສະນັ້ນ, ຕົວເລກຄາດຄະເນປະຕິບັດດັ່ງກ່າວ ຕ້ອງສ້າງຂຶ້ນບົນພື້ນຖານຄວາມຮັບຮູ້ທີ່ດີທີ່ສຸດຂອງຜູ້ບໍລິຫານ ກ່ຽວກັບເຫດການ ແລະ ພາກປະຕິບັດຕົວຈິງໃນປັດຈຸບັນ ເຊິ່ງສາລະສຳຄັນຂອງການຄາດຄະເນນັ້ນ ອາດຈະແຕກຕ່າງຈາກການຄາດຄະເນໃນເບື້ອງຕົ້ນຢ່າງເປັນສາລະສຳຄັນ.

## 2 ນະໂຍບາຍການບັນຊີ (ຕໍ່)

### 2.2 ເງິນສົດ ແລະ ລາຍການທຽບເທົ່າເງິນສົດ

ເງິນສົດ ແລະ ລາຍການທຽບເທົ່າເງິນສົດ ປະກອບດ້ວຍເງິນສົດໃນມື, ເງິນຝາກທີ່ສາມາດຮຽກຄືນໄດ້ໃນເວລາທີ່ຕ້ອງການກັບທະນາຄານ ແລະ ເງິນຝາກທະນາຄານມີອາຍຸສາມເດືອນ ຫຼື ໜ້ອຍກວ່າ ນັບຈາກມື້ທີ່ໄດ້ມາ ແຕ່ບໍ່ລວມເງິນຝາກແຮບັງຄັບ.

### 2.3 ໜີ້ຕ້ອງຮັບສັນຍາເຊົ່າການເງິນ ແລະ ລູກໜີ້ສິນເຊື່ອຜ່ອນຊໍາລະ

ໜີ້ຕ້ອງຮັບສັນຍາເຊົ່າການເງິນ ແລະ ລູກໜີ້ສິນເຊື່ອຜ່ອນຊໍາລະແມ່ນມູນຄ່າທີ່ຈະໄດ້ຮັບຈາກລູກຄ້າຈາກການໃຫ້ສິນເຊື່ອບຸກຄົນໃຫ້ກັບລູກຄ້າເພື່ອຊື້ລົດຈັກ ແລະ ລົດໄຖຕາມກິດຈະກໍາຫຼັກ ຂອງບໍລິສັດ, ເຊິ່ງລວມມີລາຍຮັບດອກເບ້ຍເບື່ອນຊໍາລະ ແລະ ລາຍຈ່າຍຄ່ານາຍໜ້າທີ່ ກ່ຽວຂ້ອງໂດຍກົງກັບສັນຍາເຊົ່າການເງິນ ແລະ ລູກໜີ້ສິນເຊື່ອຜ່ອນຊໍາລະ.

ໜີ້ຕ້ອງຮັບສັນຍາເຊົ່າການເງິນ ແລະ ລູກໜີ້ສິນເຊື່ອຜ່ອນຊໍາລະສະແດງດ້ວຍມູນຄ່າຕົ້ນທຶນຫັກດ້ວຍຄ່າສໍາຮອງໜີ້ສົງໄສຈະສູນໃນບົດອະທິບາຍຊ້ອນທ້າຍ 2.4

### 2.4 ສໍາຮອງໜີ້ສົງໄສຈະເສຍ ແລະ ໜີ້ສູນ

ຜູ້ບໍລິຫານຂອງບໍລິສັດໄດ້ປະເມີນຄ່າສໍາຮອງສໍາລັບໜີ້ສົງໄສຈະສູນ ຈາກຍອດຄ້າງຊໍາລະອີງຕາມການເກັບໜີ້ທີ່ຜ່ານມາ ແລະ ຂໍ້ມູນໃນປະຈຸບັນ ແລະ ອານາຄົດ ຜູ້ບໍລິຫານ ຈະການຕັ້ງສໍາຮອງໜີ້ສົງໄສຈະສູນ ຕາມແຈ້ງການເລກທີ 512/ທຫລ ຂອງທະນາຄານແຫ່ງ ສປປ ລາວ. ໜີ້ສູນຈະຖືກຫັກລ້າງອອກຈາກບັນຊີໃນປີທີ່ຖືກລະບຸ ແລະ ຮັບຮູ້ໃນໃບລາຍງານຜົນໄດ້ຮັບ. ໜີ້ສູນທີ່ສາມາດເກັບຄືນໄດ້ແມ່ນຖືກບັນທຶກໂດຍຫັກລົບກັບລາຍຈ່າຍສໍາຮອງໜີ້ສົງໄສຈະສູນ ແລະ ໜີ້ສູນໃນໃບລາຍງານຜົນໄດ້ຮັບ.

### 2.5 ຊັບສິນລໍຖ້າການຂາຍ

ຊັບສິນລໍຖ້າການຂາຍແມ່ນຊັບສິນທີ່ຍຶດມາຈາກຜູ້ເຊົ່າ ຫຼື ລູກໜີ້ສິນເຊື່ອ, ຊັບສິນລໍຖ້າຂາຍນີ້ແມ່ນຖືກສະແດງຕາມມູນຄ່າຕົ້ນທຶນ ລົບດ້ວຍຄ່າໃຊ້ຈ່າຍທີ່ຈໍາເປັນໃນການຂາຍອອກ ແລະ ສໍາຮອງຄ່າສູນເສຍມູນຄ່າຂອງຊັບສິນ, ການສໍາຮອງຄ່າສູນເສຍມູນຄ່າຂອງຊັບສິນ ແມ່ນອີງໃສ່ປະຫວັດຂາຍໃນອາດີດ ແລະ ການຄາດຄະເນຂອງຜູ້ບໍລິຫານ.

## 2 ນະໂຍບາຍການບັນຊີ (ຕໍ່)

### 2.6 ສ່ວນປັບປຸງອາຄານເຊົ່າ ແລະ ອຸປະກອນ

ສ່ວນປັບປຸງອາຄານເຊົ່າ ແລະ ອຸປະກອນ ແມ່ນບັນທຶກຕາມຕົ້ນທຶນ ລົບ ຄ່າຫຼຸ້ຍຫ້ຽນສະສົມ ແລະ ຂາດທຶນຈາກການສູນເສຍມູນຄ່າສະສົມ

ຕົ້ນທຶນປະກອບຂອງສ່ວນປັບປຸງອາຄານເຊົ່າ ແລະ ອຸປະກອນປະກອບດ້ວຍ ລາຄາຊື້, ພາສີນໍາເຂົ້າ, ພາສີຊື້ທີ່ບໍ່ສາມາດຂໍຄືນໄດ້ (ຫຼັງຈາກທີ່ມີການຫັກສ່ວນຫຼຸດການຄ້າ) ແລະ ຕົ້ນທຶນທາງກົງທີ່ກ່ຽວຂ້ອງກັບການຊື້ຊັບສິນ ແລະ ລາຍຈ່າຍທີ່ຈໍາເປັນເພື່ອເຮັດໃຫ້ຊັບສິນດັ່ງກ່າວໃຊ້ງານໄດ້ຕາມການພິຈາລະນາຂອງຜູ້ບໍລິຫານ.

ລາຍຈ່າຍໃນການປ່ຽນແທນພາກສ່ວນໜຶ່ງຂອງສ່ວນປັບປຸງອາຄານເຊົ່າ ແລະ ອຸປະກອນ ແມ່ນລວມເຂົ້າໃນມູນຄ່າຍັງເຫຼືອຕາມບັນຊີຊັບສິນ ເມື່ອຄາດວ່າຜົນປະໂຫຍດທາງດ້ານເສດຖະກິດໃນອະນາຄົດຂອງອຸປະກອນທີ່ປ່ຽນແທນດັ່ງກ່າວຈະນໍາມາໃຫ້ບໍລິສັດ ແລະ ຊັບສິນທີ່ຖືກປ່ຽນແທນນັ້ນຕ້ອງໄດ້ລົບລ້າງອອກຈາກບັນຊີ.

ຄ່າສ້ອມແປງ ແລະ ບໍາລຸງຮັກສາ ແມ່ນບັນທຶກເຂົ້າໃນບົດລາຍງານຜົນໄດ້ຮັບ ແລະ ປີການບັນຊີທີ່ລາຍການດັ່ງກ່າວເກີດຂຶ້ນ.

ຄ່າຫຼຸ້ຍຫ້ຽນແມ່ນຄິດໄລ່ແບບສະໝໍ່າສະເໝີ ຕາມການຄາດຄະເນອາຍຸການນໍາໃຊ້ ດັ່ງລຸ່ມນີ້:

| | ປີ |
|---|---:|
| ສ່ວນປັບປຸງອາຄານເຊົ່າ | 5 - 10 |
| ເຟີນີເຈີ ແລະ ເຄື່ອງຕົກແຕ່ງຫ້ອງການ | 5 |
| ເຄື່ອງໃຊ້ຫ້ອງການ | 3 - 5 |
| ຍານພາຫະນະ | 5 |

ເມື່ອໃດກໍ່ຕາມທີ່ມີຂໍ້ບົ່ງຊີ້ ສະແດງໃຫ້ເຫັນເຖິງການຫຼຸດລົງຢ່າງຖາວອນຂອງອຸປະກອນເຊັ່ນ: ຫຼັກຖານກ່ຽວກັບຄວາມເກົ່າ ຫຼື ລ້າສະໄໝ ຫຼື ມີການເສຍຫາຍຂອງຊັບສິນ. ການປ່ຽນແປງໃນລັກສະນະຂອງຊັບສິນທີ່ຖືກນໍາໃຊ້ ຫຼື ຄາດວ່າຈະໄດ້ນໍາໃຊ້, ບໍລິສັດຈະຮັບຮູ້ການຂາດທຶນ ໃນການຫຼຸດລົງຂອງມູນຄ່າອຸປະກອນ ໃນໃບລາຍງານຜົນໄດ້ຮັບ ຖ້າມູນຄ່າຍັງເຫຼືອຕາມບັນຊີຂອງຊັບສິນສູງກວ່າມູນຄ່າຈໍານວນເງິນທີ່ຈະໄດ້ຮັບຄືນ, ມູນຄ່າຈໍານວນເງິນທີ່ຈະໄດ້ຮັບຄືນຂອງຊັບສິນແມ່ນມູນຄ່າທີ່ສູງກວ່າລະຫວ່າງມູນຄ່າຍຸດຕິທໍາ ລົບຕົ້ນທຶນເພື່ອຂາຍ ແລະ ມູນຄ່າຈາກການນໍາໃຊ້.

### 2.7 ຊັບສິນບໍ່ມີຕົວຕົນ

ຊັບສິນບໍ່ມີຕົວຕົນທີ່ບໍ່ມີຕົວຕົນໄດ້ແກ່ມູນຄ່າຂອງໂປຣແກຣມຄອມພິວເຕີທີ່ຊື້ມາ ແມ່ນບັນທຶກເປັນຊັບສິນບໍ່ມີຕົວຕົນທີ່ບໍ່ມີຕົວຕົນຕາມຕົ້ນທຶນທີ່ເກີດຂຶ້ນໃນການຊື້ ແລະ ນໍາໂປຣແກຣມດັ່ງກ່າວມາໃຊ້ງານ. ຄ່າຫຼຸ້ຍຫ້ຽນແມ່ນຄິດໄລ່ແບບສະໝໍ່າສະເໝີຕາມການຄາດຄະເນອາຍຸການນໍາໃຊ້ລະຫວ່າງ 5 ປີ.

ລາຍຈ່າຍທີ່ກ່ຽວຂ້ອງກັບການບໍາລຸງຮັກສາ ໂປຣແກຣມຄອມພິວເຕີ ແມ່ນຮັບຮູ້ເປັນລາຍຈ່າຍເມື່ອລາຍການນັ້ນເກີດຂຶ້ນ.

ລາຍຈ່າຍໃນການຍືນອາຍຸການໃຊ້ງານຂອງໂປຣແກຣມຄອມພິວເຕີ ແມ່ນຈະຖືກບັນທຶກເປັນລາຍຈ່າຍສ່ວນປັບປຸງ ແລະ ຖືກລວມເຂົ້າໃນຕົ້ນທຶນເດີມຂອງໂປຣແກຣມຄອມພິວເຕີ.

## 2 ນະໂຍບາຍການບັນຊີ (ຕໍ່)

### 2.8 ສ່ວນເພີ່ມມູນຄ່າຮຸ້ນ

ສ່ວນເພີ່ມມູນຄ່າຮຸ້ນແມ່ນຖືກຮັບຮູ້ເມື່ອບໍລິສັດໄດ້ຮັບເງິນຈາກການຂາຍຮຸ້ນຄັ້ງທໍາອິດ ແລະ ຈໍານວນດັ່ງກ່າວໄດ້ຖືກຄິດໄລ່ໂດຍອີງໃສ່ຜົນຕ່າງລະຫວ່າງລາຄາທີ່ສະເໜີຂາຍໃນເບື້ອງຕົ້ນ ແລະ ມູນຄ່າທີ່ກໍານົດໄວ້ຕາມການຫັກຕົ້ນທຶນໃນການຈັດຈໍາໜ່າຍ.

### 2.9 ການຮັບຮູ້ລາຍຮັບ ແລະ ລາຍຈ່າຍ

ລາຍຮັບດອກເບ້ຍຈາກໜີ້ຕ້ອງຮັບຈາກສັນຍາເຊົ່າການເງິນ ແລະ ໜີ້ຕ້ອງຮັບຈາກສິນເຊື່ອຜ່ອນຊໍາລະຈະຖືກຮັບຮູ້ຕາມຫຼັກເກນຄົງຄ້າງ ເຊິ່ງຈະຄິດໄລ່ໂດຍໃຊ້ວິທີອັດຕາດອກເບ້ຍທີ່ແທ້ຈິງ.

ລາຍຮັບຄ່າທໍານຽມຈາກການດໍາເນີນງານ ແລະ ບໍລິການ ແມ່ນຖືກຮັບຮູ້ເມື່ອໄດ້ໃຫ້ບໍລິການ.

ຄ່າປັບໃໝ (ຄ່າປັບໃໝຈາກການຈ່າຍຊ້າ) ແມ່ນຖືກຮັບຮູ້ເມື່ອໄດ້ຮັບເງິນ.

ລາຍຮັບ ແລະ ລາຍຈ່າຍອື່ນ ແມ່ນຖືກຮັບຮູ້ຕາມຫຼັກເກນຄົງຄ້າງ

### 2.10 ສັນຍາເຊົ່າ - ບໍລິສັດເປັນຜູ້ໃຫ້ເຊົ່າ

ສັນຍາເຊົ່າທີ່ມີການໂອນສ່ວນສໍາຄັນຂອງຄວາມສ່ຽງ ແລະ ຜົນຕອບແທນໃຫ້ຜູ້ເຊົ່າ ແມ່ນຖືກຈັດໃຫ້ເປັນສັນຍາເຊົ່າການເງິນ

ເມື່ອຊັບສິນມີການໃຫ້ເຊົ່າພາຍໃຕ້ສັນຍາເຊົ່າທາງການເງິນ, ມູນຄ່າລົງທຶນສຸດທິໃນການເຊົ່າ ແມ່ນຖືກຮັບຮູ້ເຂົ້າເປັນໜີ້ຕ້ອງຮັບ ສ່ວນຕ່າງລະຫວ່າງໜີ້ຕ້ອງຮັບລວມ ແລະ ມູນຄ່າລົງທຶນສຸດທິຂອງໜີ້ຕ້ອງຮັບແມ່ນຖືກຮັບຮູ້ເປັນດອກເບ້ຍລໍຖ້າຮັບ. ລາຍຮັບດອກເບ້ຍຈາກສັນຍາເຊົ່າຖືກຮັບຮູ້ຕາມບົດອະທິບາຍ ເລກທີ 2.9.

### 2.11 ສັນຍາເຊົ່າ - ບໍລິສັດເປັນຜູ້ເຊົ່າ

- *ສັນຍາເຊົ່າດໍາເນີນງານ*

  ສັນຍາເຊົ່າທີ່ບໍ່ໄດ້ໂອນສ່ວນສໍາຄັນຂອງຄວາມສ່ຽງ ແລະ ຜົນຕອບແທນໃຫ້ຜູ້ເຊົ່າ ແມ່ນຖືກຈັດໃຫ້ເປັນສັນຍາເຊົ່າດໍາເນີນງານ. ລາຍຈ່າຍທີ່ເກີດຂຶ້ນພາຍໃຕ້ສັນຍາເຊົ່າດໍາເນີນງານແມ່ນຖືກຮັບຮູ້ເຂົ້າໃນບັດລາຍງານຜົນໄດ້ຮັບຕາມຫຼັກການສະໝໍ່າສະເໝີຕະຫຼອດອາຍຸສັນຍາເຊົ່າ.

- *ສັນຍາເຊົ່າທາງການເງິນ*

  ສັນຍາເຊົ່າທາງການເງິນ ແມ່ນສັນຍາເຊົ່າທີ່ບໍລິສັດໄດ້ຮັບຄວາມສ່ຽງ ແລະ ຜົນຕອບແທນສ່ວນໃຫ່ຍຂອງການເປັນເຈົ້າຂອງຊັບສິນ ຍົກເວັ້ນສິດທິທາງກົດໝາຍ ຖືເປັນສັນຍາເຊົ່າທາງການເງິນ. ບໍລິສັດບັນທຶກຊັບສິນ ແລະ ໜີ້ສິນໃນເອກະສານສະແດງຖານະການເງິນເທົ່າກັບມູນຄ່າຍຸຕິທໍາ ໃນມື້ທີ່ເລີ້ມສັນຍາເຊົ່າ ຫຼື ມູນຄ່າປະຈຸບັນຈໍານວນເງິນຂັ້ນຕໍ່າທີ່ຕ້ອງຈ່າຍຕາມສັນຍາເຊົ່າແລ້ວແຕ່ຈໍານວນໃດຈະຕໍ່າກວ່າ ຄ່າຫຼູ້ຍຫ້ຽນຂອງຊັບສິນທີ່ເຊົ່າຄໍານວນໂດຍວິທີຄິດໄລ່ແບບສະເໝີຕົວຕະຫຼອດອາຍຸການໃຊ້ງານດ້ວຍປະມານຂອງຊັບສິນຄ່າໃຊ້ຈ່າຍທາງການເງິນ ຄໍານວນໂດຍໃຊ້ວິທີອັດຕາດອກເບ້ຍແບບສະເໝີຕົວຕະຫຼອດໄລຍະເວລາຂອງສັນຍາ ຄ່າໃຊ້ຈ່າຍທາງການເງິນ ແລະ ຄ່າຫຼູ້ຍຫຼ້ຽນ ຮັບຮູ້ເປັນຄ່າໃຊ້ຈ່າຍໃນໃບລາຍງານຜົນໄດ້ຮັບ.

## 2. ນະໂຍບາຍການບັນຊີ (ຕໍ່)

### 2.12 ລາຍການເຄື່ອນໄຫວເປັນເງິນຕາຕ່າງປະເທດ

ລາຍການເຄື່ອນໄຫວເປັນເງິນຕາຕ່າງປະເທດຈະຖືກປ່ຽນເປັນສະກຸນເງິນກີບ ໂດຍໃຊ້ອັດຕາແລກປ່ຽນໃນມື້ທີ່ມີການເຄື່ອນໄຫວເກີດຂຶ້ນ.

ໃນຕອນທ້າຍຂອງຮອບເວລາລາຍງານແຕ່ລະຄັ້ງ ຊັບສິນ ແລະ ໜີ້ສິນທີ່ເປັນສະກຸນເງິນຕາຕ່າງປະເທດ ຖືກປ່ຽນຄ່າໂດຍໃຊ້ອັດຕາແລກປ່ຽນໃນມື້ປິດບັນຊີ. ຊັບສິນ ແລະ ໜີ້ສິນທີ່ບໍ່ເປັນເງິນທີ່ຖືກກໍານົດໄວ້ເປັນອັດຕາຕ່າງປະເທດຖືກຕີມູນຄ່າຕາມຕົ້ນທຶນເດີມໂດຍນໍາໃຊ້ອັດຕາແລກປ່ຽນໃນມື້ທີ່ມີການເຄື່ອນໄຫວເກີດຂຶ້ນ.

ກໍາໄລ ແລະ ຂາດທຶນທີ່ເກີດຈາກການຊໍາລະສະສາງຂອງການເຄື່ອນໄຫວທີ່ເປັນເງິນຕາຕ່າງປະເທດ ແລະ ເກີດຈາກການປ່ຽນຄ່າຊັບສິນ ແລະ ໜີ້ສິນທີ່ເປັນເງິນທີ່ຖືກກໍານົດເປັນອັດຕາຕ່າງປະເທດ ແມ່ນຮັບຮູ້ໃນລາຍງານຜົນໄດ້ຮັບ.

### 2.13 ລາຍຈ່າຍອາກອນລາຍຮັບ

ລາຍຈ່າຍອາກອນລາຍຮັບແມ່ນຖືກບັນທຶກຕາມອາກອນທີ່ນໍາສົ່ງ ແລະ ອາກອນຄົງຄ້າງໃນປີ

## 3. ເງິນສົດ ແລະ ລາຍການທຽບເທົ່າເງິນສົດ

| | **2023**<br>**ກີບ** | **2022**<br>**ກີບ** |
|---|---:|---:|
| ເງິນສົດໃນມື | 38.921.900 | 25.884.159 |
| ເງິນຝາກໃນທະນາຄານທີ່ສາມາດຮຽກເກັບໄດ້ໃນເວລາທີ່ຕ້ອງການ [(i)] | 5.937.007.499 | 6.653.275.314 |
| ເງິນຝາກມີກໍານົດ[(ii)] | 898.800.000.000 | - |
| | **904.775.929.399** | **6.679.159.473** |

(i) ເງິນຝາກໃນທະນະຄານລວມມີສາມສະກຸນເງິນຄືສະກຸນກີບ, ບາດ ແລະ ໂດລາ ໃນບັນຊີເງິນຝາກກະແສລາຍວັນ ກັບທະນາຄານພາຍໃນປະເທດ ແລະ ສາຂາທະນາຄານຕ່າງປະເທດໃນລາວ.

(ii) ເງິນຝາກມີກໍານົດແມ່ນເງິນຝາກມີກໍານົດ 3 ເດືອນ ຄືຈາກ 21 ທັນວາ 2023 ຫາ 20 ມີນາ 2024 ໃນສະກຸນເງິນບາດດ້ວຍອັດຕາດອກເບ້ຍ 2.5% ຕໍ່ປີ.

## 4. ໜີ້ຕ້ອງຮັບສັນຍາເຊົ່າການເງິນ ແລະ ລູກໜີ້ສິນເຊື່ອຜ່ອນຊໍາລະ, ສຸດທິ

ໜີ້ຕ້ອງຮັບສັນຍາເຊົ່າການເງິນ ແລະ ລູກໜີ້ສິນເຊື່ອຜ່ອນຊໍາລະ ໃນວັນທີ 31 ທັນວາ ປະກອບມີ:

| | 2023<br>ກີບ | 2022<br>ກີບ |
|---|---:|---:|
| **ໝູນວຽນ** | | |
| ສັດສ່ວນໝູນວຽນຂອງໜີ້ຕ້ອງຮັບຈາກສັນຍາເຊົ່າການເງິນ | 1.087.689.299 | 1.304.674.924 |
| ສັດສ່ວນໝູນວຽນຂອງລູກໜີ້ສິນເຊື່ອຜ່ອນຊໍາລະ | 69.127.826.376 | 59.089.032.739 |
| | **70.215.515.675** | **60.393.707.663** |
| <u>ເພີ່ມ</u> ຕົ້ນທຶນທາງກົງ | 521.345.223 | 1.260.729.026 |
| <u>ຫັກ</u> ສໍາຮອງໜີ້ສົງໄສຈະສູນ | (7.407.023.464) | (5.484.298.345) |
| | **63.329.837.434** | **56.170.138.344** |
| **ບໍ່ໝູນວຽນ** | | |
| ໜີ້ຕ້ອງຮັບຈາກສັນຍາເຊົ່າທາງການເງິນ | 168.286.430 | 480.170.540 |
| ລູກໜີ້ສິນເຊື່ອຜ່ອນຊໍາລະ | 22.694.487.334 | 39.411.368.189 |
| | **22.862.773.764** | **39.891.538.729** |
| <u>ເພີ່ມ</u> ຕົ້ນທຶນທາງກົງ | 326.103.399 | 1.193.117.636 |
| <u>ຫັກ</u> ສໍາຮອງໜີ້ສົງໄສຈະສູນ | (295.072.922) | (647.889.486) |
| | **22.893.804.241** | **40.436.766.879** |
| **ລວມ** | **86.223.641.675** | **96.606.905.223** |

ໃນວັນທີ 31 ທັນວາ , ໜີ້ຕ້ອງຮັບສັນຍາເຊົ່າການເງິນ ແລະ ໜີ້ຕ້ອງຮັບເງິນກູ້ຜ່ອນຊໍາລະໃນໃບລາຍງານຖານະການເງິນ, ສາມາດວິເຄາະອາຍຸການໄດ້ດັ່ງນີ້:

| | 2023<br>ກີບ | 2022<br>ກີບ |
|---|---:|---:|
| ບໍ່ຄົບກໍານົດ | 73.759.785.934 | 82.651.207.657 |
| 1 – 3 ເດືອນ | 10.186.010.761 | 10.670.660.205 |
| 4 – 5 ເດືອນ | 1.498.171.269 | 840.975.684 |
| 6 – 12 ເດືອນ | 1.755.817.947 | 1.726.930.204 |
| ເກີນ 12 ເດືອນ | 5.878.503.528 | 4.395.472.642 |
| | **93.078.289.439** | **100.285.246.392** |
| <u>ເພີ່ມ</u> ຕົ້ນທຶນທາງກົງ | 847.448.622 | 2.453.846.662 |
| <u>ຫັກ</u> ສໍາຮອງໜີ້ສົງໄສຈະສູນ | (7.702.096.386) | (6.132.187.831) |
| **ລວມ** | **86.223.641.675** | **96.606.905.223** |

## 5. ຊັບສິນຖືໄວ້ເພື່ອຂາຍ, ສຸດທິ

| | 2023<br>ກີບ | 2022<br>ກີບ |
|---|---|---|
| ລົດຈັກ | 167.906.395 | 281.652.873 |
| ຫັກ ເງິນແຮການສູນເສຍມູນຄ່າຂອງຊັບສິນຖືໄວ້ເພື່ອຂາຍ | (12.500.000) | (20.000.000) |
| | **155.406.395** | **261.652.873** |

## 6. ຊັບສິນໝູນວຽນອື່ນໆ

| | 2023<br>ກີບ | 2022<br>ກີບ |
|---|---|---|
| ລາຍຮັບດອກເບ້ຍຈາກເງິນຝາກທະນາຄານ | 812.198.623 | - |
| ລາຍຈ່າຍລ່ວງໜ້າ | 742.151.185 | 535.837.453 |
| ຊຳລະເງິນລ່ວງໜ້າ | 28.776.000 | 25.873.630 |
| ອື່ນໆ | 73.371.053 | 115.031.700 |
| | **1.656.496.861** | **676.742.783** |

## 7. ເງິນຝາກຄ້ຳປະກັນເງິນກູ້

ແມ່ນເງິນທີ່ບໍ່ສາມາດນຳໃຊ້ໄດ້ ເຊິ່ງລວມມີບັນຊີເງິນຝາກມີກຳນົດ 1.500 ລ້ານກີບ ແລະ ບັນຊີກະແສລາຍວັນທີ່ຕ້ອງມີເງິນຂັ້ນຕໍ່າ 500 ລ້ານກີບ ທີ່ໃຊ້ເປັນເງິນຄ້ຳປະກັນສຳລັບການກູ້ຢືມນຳທະນາຄານພາຍໃນປະເທດຕະຫຼອດໄລຍະສັນຍາກູ້ຢືມ (ບົດອະທິບາຍ 12).

## 8. ເງິນຝາກທີ່ທະນາຄານແຫ່ງ ສປປ ລາວ

ເງິນແຮຝາກບັງຄັບທີ່ທະນາຄານແຫ່ງ ສປປ ລາວ ຈຳນວນ 2.000 ລ້ານກີບ, ໂດຍຄິດເປັນ 5% ຂອງທຶນຈົດທະບຽນທັງໝົດ 40.000 ລ້ານກີບ. ເງິນດັ່ງກ່າວບໍ່ສາມາດເອົາມານຳໃຊ້ໃນການດຳເນີນງານປະຈຳວັນ. ເງິນສົດດັ່ງກ່າວຈະຖືກສົ່ງຄືນໄດ້ຖ້າບໍລິສັດມີການຍຸບເລີກກິດຈະການ.

**9. ຊັບສິນຄົງທີ່ມີຕົວຕົນ, ສຸດທິ**

| | **ສ່ວນປັບປຸງອາຄານ**<br>**ກີບ** | **ເຟີນີເຈີ ແລະ ອຸປະກອນ**<br>**ກີບ** | **ເຄື່ອງໃຊ້ຫ້ອງການ**<br>**ກີບ** | **ຍານພາຫະນະ**<br>**ກີບ** | **ລວມ**<br>**ກີບ** |
|---|---|---|---|---|---|
| **ໃນວັນທີ 31 ທັນວາ 2022** | | | | | |
| ຕົ້ນທຶນ | 603.110.638 | 544.540.581 | 899.550.890 | 1.929.974.036 | 3.977.176.145 |
| ຫັກ: ຄ່າຫລຸ້ຍຫ້ຽນສະສົມ | (593.229.687) | (433.822.271) | (679.573.582) | (1.620.951.426) | (3.327.576.966) |
| **ມູນຄ່າ, ສຸດທິ** | **9.880.951** | **110.718.310** | **219.977.308** | **309.022.610** | **649.599.179** |
| **ທ້າຍປີວັນທີ 31 ທັນວາ 2023** | | | | | |
| ຍອດຍົກມາ, ສຸດທິ | 9.880.951 | 110,718,310 | 219,977,308 | 309,022.610 | 649.599.179 |
| ເພີ່ມຂຶ້ນ | 46.015.200 | 179.396.350 | 174.383.450 | - | 399.795.000 |
| ຈັດປະເພດຄືນໃໝ່ | 72.466.819 | 9.769.950 | (82.236.769) | - | - |
| ສະສາງອອກ | (859.436) | - | (713.543) | - | (1.572.979) |
| ຄ່າຫລຸ້ຍຫ້ຽນ | (45.018.442) | (59.363.604) | (84.669.041) | (139.324.678) | (328.375.765) |
| **ມູນຄ່າ. ສຸດທິ** | **82.485.092** | **240.521.006** | **226.741.405** | **169.697.932** | **719.445.435** |
| **ໃນວັນທີ 31 ທັນວາ 2023** | | | | | |
| ຕົ້ນທຶນ | 1.070.223.480 | 628.538.139 | 716.526.115 | 1.929.974.036 | 4.345.261.770 |
| ຫັກ: ຄ່າຫລຸ້ຍຫ້ຽນສະສົມ | (987.738.388) | (388.017.133) | (489.784.710) | (1.760.276.104) | (3.625.816.335) |
| **ມູນຄ່າ. ສຸດທິ** | **82.485.092** | **240.521.006** | **226.741.405** | **169.697.932** | **719.445.435** |

**9. ຊັບສິນຄົງທີ່ມີຕົວຕົນ. ສຸດທິ (ຕໍ່)**

| | ສ່ວນປັບປຸງອາຄານ<br>ກີບ | ເຟີນີເຈີ ແລະ ອຸປະກອນ<br>ກີບ | ເຄື່ອງໃຊ້ຫ້ອງການ<br>ກີບ | ຍານພາຫະນະ<br>ກີບ | ລວມ<br>ກີບ |
|---|---|---|---|---|---|
| **ໃນວັນທີ 31 ທັນວາ 2021** | | | | | |
| ຕົ້ນທຶນ | 603.110.638 | 506.135.282 | 778.445.700 | 1.929.974.036 | 3.817.665.656 |
| ຫັກ: ຄ່າຫລຸ້ຍຫ້ຽນສະສົມ | (501.892.446) | (362.466.185) | (571.424.264) | (1.442.500.410) | (2.878.283.305) |
| **ມູນຄ່າ. ສຸດທິ** | **101.218.192** | **143.669.097** | **207.021.436** | **487.473.626** | **939.382.351** |
| **ທ້າຍປີວັນທີ 31 ທັນວາ 2022** | | | | | |
| ຍອດຍົກມາ. ສຸດທິ | 101.218.192 | 143.669.097 | 207.021.436 | 487.473.626 | 939.382.351 |
| ເພີ່ມຂຶ້ນ | - | 39.470.900 | 125.101.087 | - | 164.571.987 |
| ສະສາງອອກ | - | (3) | (132.249) | - | (132.252) |
| ຄ່າຫລຸ້ຍຫ້ຽນ | (91.337.241) | (72.421.684) | (112.012.966) | (178.451.016) | (454.222.907) |
| **ມູນຄ່າ. ສຸດທິ** | **9.880.951** | **110.718.310** | **219.977.308** | **309.022.610** | **649.599.179** |
| **ໃນວັນທີ 31 ທັນວາ 2022** | | | | | |
| ຕົ້ນທຶນ | 603.110.638 | 544.540.581 | 899.550.890 | 1.929.974.036 | 3.977.176.145 |
| ຫັກ: ຄ່າຫລຸ້ຍຫ້ຽນສະສົມ | (593.229.687) | (433.822.271) | (679.573.582) | (1.620.951.426) | (3.327.576.966) |
| **ມູນຄ່າ. ສຸດທິ** | **9.880.951** | **110.718.310** | **219.977.308** | **309.022.610** | **649.599.179** |

**10. ຊັບສິນບໍ່ມີຕົວຕົນ, ສຸດທິ**

| | 2023<br>ກີບ | 2022<br>ກີບ |
|---|---|---|
| ຍອດຍົກມາໃນວັນທີ 1 ມັງກອນ | 129.298.349 | 205.780.698 |
| ເພີ່ມຂຶ້ນ | - | - |
| ຫັກ: ຄ່າຫຼຸ້ຍຫ້ຽນ | (76.377.007) | (76.482.349) |
| **ມູນຄ່າສຸດທິໃນວັນທີ 31 ທັນວາ** | **52.921.342** | **129.298.349** |
| ຕົ້ນທຶນ | 271.963.727 | 271.963.727 |
| ຫັກ: ຄ່າຫຼຸ້ຍຫ້ຽນ | (219.042.385) | (142.665.378) |
| **ມູນຄ່າຕາມບັນຊີສຸດທິ ໃນວັນທີ 31 ທັນວາ** | **52.921.342** | **129.298.349** |

**11. ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ**

| | 2023<br>ກີບ | 2022<br>ກີບ |
|---|---|---|
| ໜີ້ໜີ້ຕ້ອງສົ່ງອື່ນໆ - ພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍ 21) | 4.760.473.887 | - |
| ຄ່າໃຊ້ຈ່າຍຄ້າງຈ່າຍ | 2.011.288.365 | 1.007.722.293 |
| ໜີ້ຕ້ອງສົ່ງການຄ້າ | 98.668.000 | 2.497.004.000 |
| ໜີ້ຕ້ອງສົ່ງອາກອນ | 97.665.189 | 81.872.191 |
| **ລວມ** | **6.968.095.441** | **3.586.598.484** |

**12. ເງິນກູ້ຢືມ**

| | 2023<br>ກີບ | 2022<br>ກີບ |
|---|---|---|
| ໝູນວຽນ | 908.805.460.751 | 22.429.331.514 |
| ບໍ່ໝູນວຽນ | 625.359.032 | 9.330.019.783 |
| ລວມ | **909.430.819.783** | **31.759.351.297** |

ການເຄື່ອນໄຫວເງິນກູ້ຢືມພາຍໃນປີມີດັ່ງນີ້:

| | 2023<br>ກີບ | 2022<br>ກີບ |
|---|---|---|
| ຍອດຍົກມາມູນຄ່າຕາມບັນຊີ. ສຸດທິ | 31.759.351.297 | 17.894.400.000 |
| ເງິນກູ້ຢືມທີ່ເພີ່ມ | 828.828.240.000 | 5.000.000.000 |
| ຊໍາລະເງິນກູ້ຢືມຄືນ | (20.661.971.514) | (995.848.703) |
| ຂາດທຶນຈາກການຕີມູນຄ່າການແລກປ່ຽນ | 69.505.200.000 | 9.860.800.000 |
| ຍອດເຫຼືອມູນຄ່າຕາມບັນຊີ. ສຸດທິ | **909.430.819.783** | **31.759.351.297** |

## 12. ເງິນກູ້ຢືມ (ຕໍ່)

ໃນເດືອນ ກຸມພາ 2020 ບໍລິສັດໄດ້ເຊັນສັນຍາກູ້ຢືມກັບສະຖາບັນການເງິນໃນຈຳນວນລວມ 3 ລ້ານໂດລາສະຫະລັດ ໃນອັດຕາດອກເບ້ຍ 1.2% ຕໍ່ປີ ແລະ ໄລຍະເວລາການຊຳລະຄືນ ຂອງການກູ້ຢືມແມ່ນ 3 ປີເລີ່ມແຕ່ມື້ຖອນຂອງແຕ່ລະງວດ. ຍອດເງິນກູ້ຢືມແມ່ນໄດ້ຮັບການຄ້ຳປະກັນໂດຍຜູ້ຖືຫຸ້ນລາຍໃຫຍ່ຄື ບໍລິສັດ ມະຫາທຶນ ໂຮນດິງ ຈຳກັດ.

ໃນວັນທີ 31 ທັນວາ 2023, ຍອດຄົງຄ້າງ 400.000 ໂດລາສະຫະລັດ ເທົ່າກັບ 8.239 ລ້ານກີບ.

ໃນວັນທີ 31 ມີນາ 2022. ບໍລິສັດໄດ້ລົງນາມສັນຍາເງິນກູ້ກັບທະນາຄານພາຍໃນ ໃນວົງເງິນ 5 ຕື້ກີບ. ເປັນໄລຍະເວລາ 3 ປີ ແລະ ດອກເບ້ຍ 9% ຕໍ່ປີ. ດອກເບ້ຍ ແລະ ເງິນຕົ້ນແມ່ນຊຳລະເປັນລາຍເດືອນ ເລີ່ມແຕ່ວັນທີ 8 ພຶດສະພາ 2022 ຫາ 8 ເມສາ 2025. ການຄ້ຳປະກັນເງິນກູ້ຢືມ ແມ່ນຕ້ອງມີເງິນຝາກມີກຳນົດ ແລະ ເງິນຝາກປະຢັດ ຕາມຍອດເງິນທີ່ລະບຸໄວ້ໃນສັນຍາເງິນກູ້ (ບົດອະທິບາຍ 7).

ໃນວັນທີ 27 ມີນາ 2022, ບໍລິສັດໄດ້ລົງນາມສັນຍາເງິນກູ້ກັບຜູ້ຖືຫຸ້ນ ໃນວົງເງິນ 240.000 ໂດລາສະຫະລັດ ເທົ່າກັບ 4.068 ລ້ານກີບ ເປັນໄລຍະເວລາ 3 ເດືອນ ແລະ ດອກເບ້ຍ 13% ຕໍ່ປີ. ການຊຳລະເງິນກູ້ແມ່ນສຳເລັດໃນວັນທີ 29 ກັນຍາ 2023.

ໃນວັນທີ 30 ພຶດສະພາ 2023, ບໍລິສັດໄດ້ລົງນາມສັນຍາເງິນກູ້ 1 ເດືອນກັບພາກສ່ວນທີ່ກ່ຽວຂ້ອງ ໃນວົງເງິນ 3 ລ້ານບາດ ຫຼື ເທົ່າກັບ 1.560 ລ້ານກີບ ດ້ວຍໄລຍະເວລາ 1 ເດືອນ ແລະ ອັດຕາດອກເບ້ຍ 15% ຕໍ່ປີ. ການຊຳລະເງິນກູ້ແມ່ນສຳເລັດໃນວັນທີ 29 ມີຖຸນາ 2023.

ໃນວັນທີ 20 ກັນຍາ 2023, ບໍລິສັດໄດ້ລົງນາມສັນຍາເງິນກູ້ກັບພາກສ່ວນທີ່ກ່ຽວຂ້ອງ ໃນວົງເງິນ 1.500 ລ້ານບາດ ດ້ວຍໄລຍະເວລາ 1 ປີ ແລະ ອັດຕາດອກເບ້ຍ 2% ຕໍ່ປີ. ດອກເບ້ຍແມ່ນຊຳລະເປັນລາຍເດືອນ. ເລີ່ມແຕ່ວັນທີ 20 ກັນຍາ 2023 ຫາ 19 ກັນຍາ 2024 (ບົດອະທິບາຍ 22). ໃນວັນທີ 31 ທັນວາ 2023, ຍອດເງິນກູ້ແມ່ນ 1.400 ລ້ານບາດ ທຽບເທົ່າ 898.800 ລ້ານກີບ.

## 13. ຂາດທຶນສຸດທິ ຈາກອັດຕາແລກປ່ຽນ

ໃນລະຫວ່າງປີ. ສະກຸນເງິນກີບ ແມ່ນອ່ອນຄ່າເມື່ອສົມທຽບກັບເງິນໂດລາສະຫະລັດ. ດັ່ງນັ້ນ. ຈຶ່ງເກີດມີຜົນກະທົບທີ່ເປັນສາລະສຳຄັນໂດຍຂາດທຶນຈາກອັດຕາແລກປ່ຽນ ຈາກຍອດເງິນກູ້ຢືມໄລຍະຍາວທີ່ເປັນສະກຸນເງິນໂດລາສະຫະລັດ (ບົດອະທິບາຍ 12)

## 14. ທຶນຈົດທະບຽນ

| | ຈຳນວນຮຸ້ນ (ຮຸ້ນ) | ມູນຄ່າຮຸ້ນສາມັນ (ກີບ) | ສ່ວນເພີ່ມມູນຄ່າຮຸ້ນ (ກີບ) | ລວມ (ກີບ) |
|---|---|---|---|---|
| **ໃນວັນທີ 1 ມັງກອນ 2022** | 400.000.000 | 40.000.000.000 | 12.832.667.550 | 40.000.000.000 |
| ຮຸ້ນທີ່ອອກ | - | - | - | - |
| **ທ້າຍປີວັນທີ 31 ທັນວາ 2022** | **400.000.000** | **40.000.000.000** | **12.832.667.550** | **40.000.000.000** |
| **ໃນວັນທີ 1 ມັງກອນ 2023** | 400.000.000 | 40.000.000.000 | 12.832.667.550 | 40.000.000.000 |
| ຮຸ້ນທີ່ອອກ | - | - | - | - |
| **ທ້າຍປີວັນທີ 31 ທັນວາ 2023** | **400.000.000** | **40.000.000.000** | **12.832.667.550** | **40.000.000.000** |

ຈຳນວນຮຸ້ນສາມັນທີ່ໄດ້ຮັບອະນຸຍາດແມ່ນ 400 ລ້ານຮຸ້ນ. ມູນຄ່າຮຸ້ນ 100 ກີບຕໍ່ຮຸ້ນ. ລວມມູນຄ່າທັງໝົດ 40.000 ລ້ານກີບ. ໃນວັນທີ 31 ທັນວາ 2023. ຮຸ້ນທີ່ອອກທັງໝົດໄດ້ຖືກຊຳລະເຕັມສ່ວນແລ້ວ.

## 15. ຄັງສະສົມຕາມລະບຽບການ

| | 2023<br>ກີບ | 2022<br>ກີບ |
|---|---:|---:|
| **1 ມັງກອນ** | 4.890.597.270 | 4.785.832.107 |
| ຈັດສັນໃນປີ | 931.655.643 | 104.765.163 |
| **31 ທັນວາ** | **5.822.252.913** | **4.890.597.270** |

ຄັງສະສົມຕາມລະບຽບການ ແມ່ນຈັດສັນຕາມກົດໝາຍວິສາຫະກິດຂອງ ສປປ ລາວ ເຊິ່ງກໍານົດການວິສາຫະກິດຕ້ອງຈັດສັນຢ່າງໜ້ອຍ 10% ຂອງກໍາໄລສຸດທິພາຍຫຼັງທີ່ໄດ້ຫັກເງິນຂາດທຶນໃນແຕ່ລະປີ ຈົນກວ່າຈະບັນລຸ 50% ຂອງທຶນຈົດທະບຽນທັງໝົດ.

## 16. ກໍາໄລພື້ນຖານຕໍ່ຮຸ້ນ

ກໍາໄລພື້ນຖານຕໍ່ຮຸ້ນແມ່ນຄິດໄລ່ໂດຍການຫານກໍາໄລສຸດທິ ທີ່ເປັນຂອງຜູ້ຖືຮຸ້ນໂດຍສະເລ່ຍຕາມຈໍານວນຂອງຮຸ້ນສາມັນ ທີ່ອອກໃນລະຫວ່າງປີ. ປັບປຸງຕາມຜົນກະທົບຈາກການປ່ຽນແປງຂອງມູນຄ່າກໍານົດຂອງຮຸ້ນ ເພື່ອປຽບທຽບດັ່ງຕໍ່ໄປນີ້:

| | 2023 | 2022 |
|---|---:|---:|
| ກໍາໄລສຸດທິທີ່ເປັນຂອງຜູ້ຖືຮຸ້ນສາມັນ (ກີບ) | 9.316.556.431 | 1.047.651.632 |
| ສະເລ່ຍຕາມຈໍານວນຂອງຮຸ້ນສາມັນທີ່ອອກ (ຮຸ້ນ) | 400.000.000 | 400.000.000 |
| ກໍາໄລພື້ນຖານຕໍ່ຮຸ້ນ (ກີບ) | 23.29 | 2.62 |

## 17. ເງິນປັນຜົນ

ໃນກອງປະຊຸມຜູ້ຖືຮຸ້ນສາມັນປະຈໍາປີ 2022 ໃນວັນທີ 25 ເມສາ 2023. ຜູ້ຖືຮຸ້ນໄດ້ອະນຸມັດການຈັດສັນກໍາໄລສຸດທິເພື່ອສໍາຮອງຕາມກົດໝາຍ ຈໍານວນເງິນ 104.756.163 ກີບ ແລະ ບໍ່ມີການຈ່າຍເງິນປັນຜົນສໍາລັບຜົນການດໍາເນີນງານໃນ 31 ທັນວາ 2022 ເນື່ອງຈາກບໍລິສັດສໍາຮອງກະແສເງິນສົດເພື່ອຈ່າຍຄືນເງິນກູ້ຢືມທີ່ຈະຄົບກໍານົດໃນອີກ 6 ເດືອນຂ້າງໜ້າ ແລະ ເພື່ອຮອງຮັບໃນການຂະຫຍາຍທຸລະກິດໃນງົບປະມານປີ 2023

ໃນກອງປະຊຸມຜູ້ຖືຮຸ້ນສາມັນປະຈໍາປີ 2021 ໃນວັນທີ 28 ເມສາ 2022. ຜູ້ຖືຮຸ້ນໄດ້ອະນຸມັດການຈ່າຍເງິນປັນຜົນປະຈໍາປີຈາກກໍາໄລສຸດທິ 12 ເດືອນ ໄລຍະສິ້ນສຸດ ວັນທີ 31 ທັນວາ 2021 ໃນມູນຄ່າ 5.7 ກີບຕໍ່ຮຸ້ນ. ລວມມູນຄ່າ 2.800 ລ້ານກີບ ແລະ ຈັດສັນກໍາໄລສຸດທິ ເພື່ອສໍາຮອງຕາມກົດໝາຍຈໍານວນເງິນ 759.159.787 ກີບ.

## 18. ລາຍຮັບອື່ນໆ

ລາຍຮັບອື່ນໆປະກອບມີດັ່ງຕໍ່ໄປນີ້:

| | **2023** | **2022** |
|---|---:|---:|
| | **ກີບ** | **ກີບ** |
| ລາຍຮັບດອກເບ້ຍຈາກເງິນຝາກທະນາຄານ | 5.999.237.936 | 167.486.087 |
| ຄ່າປັບໄໝ | 1.555.347.839 | 1.348.875.256 |
| ກໍາໄລສຸດທິຈາກການຂາຍຊັບສິນ ລໍຖ້າຂາຍ (ບົດອະທິບາຍ 19) | 23.410.919 | 200.677.272 |
| ລາຍຮັບອື່ນໆ | 22.206.060 | 561.199.583 |
| **ລວມ** | **7.600.202.754** | **2.278.238.198** |

## 19. ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ

| | **2023** | **2022** |
|---|---:|---:|
| | **ກີບ** | **ກີບ** |
| ລາຍຈ່າຍພະນັກງານ | 12.256.026.706 | 8.974.586.955 |
| ລາຍຈ່າຍການຕະຫຼາດ ແລະ ໂຄສະນາ | 2.447.370.839 | 1.214.367.336 |
| ຄ່າທີ່ປຶກສາ ແລະ ກວດສອບບັນຊີ | 976.307.100 | 838.502.634 |
| ຄ່າເດີນທາງ ແລະ ຄ່າຂົນສົ່ງ | 961.467.599 | 527.222.979 |
| ຄ່າຕອບແທນຜູ້ບໍລິຫານ | 819.134.000 | 856.000.000 |
| ລາຍຈ່າຍສາທາລະນຸປະໂພກ | 899.790.403 | 719.021.774 |
| ຄ່າຫຼຸ້ຍຫ້ຽນ | 404.755.902 | 530.705.258 |
| ລາຍຈ່າຍອື່ນໆ(*) | 2.119.490.228 | 1.573.910.425 |
| **ລວມ** | **20.884.342.777** | **15.234.317.361** |

(*) ລາຍຈ່າຍອື່ນໆຫຼັກໆແລ້ວປະກອບດ້ວຍອາກອນທັນນະທີ່ຈ່າຍທີ່ບໍລິສັດຕ້ອງຮັບຜິດຊອບມູນຄ່າ 550 ລ້ານ, ເຄື່ອງໃຊ້ຫ້ອງການ ມູນຄ່າ 266 ລ້ານກີບ, ຄ່າທໍານຽມທະນາຄານ ມູນຄ່າ 256 ລ້ານກີບ ແລະ ລາຍຈ່າຍອື່ນໆ.

## 20. ລາຍຈ່າຍການເງິນ

| | **2023** | **2022** |
|---|---:|---:|
| | **ກີບ** | **ກີບ** |
| ລາຍຈ່າຍດອກເບ້ຍເງິນກູ້ຢືມ | 5.648.855.268 | 592.992.215 |
| ລາຍຈ່າຍຄ່າຄໍ້າປະກັນເງິນກູ້ຢືມ | 1.945.190.023 | 2.989.992.040 |
| | **7.594.045.291** | **3.582.984.255** |

## 21 ອາກອນກໍາໄລ

ຢູ່ ສປປ ລາວ, ການຄິດພາສີລາຍຮັບແມ່ນໄດ້ຮັບການກວດກາຄືນຢ່າງເປັນປົກກະຕິໂດຍເຈົ້າໜ້າທີ່ທີ່ກ່ຽວຂ້ອງ. ນອກນີ້ ບັນຫາພາສີທີ່ເກີດອອກມາໃນການທົບທວນຄືນອາດຈະຕ້ອງມີການຕັດສິນ ແລະ ຕີລາຄາຢ່າງຕັ້ງໜ້າຈາກຝ່າຍຕ່າງໆ.

ດັ່ງນັ້ນ, ການທົບທວນຄືນອາດຈະເຮັດໃຫ້ມີການຊໍາລະພາສີເພີ່ມເຕີມ ຫຼື ການສົ່ງເງິນຄືນແມ່ນມີຄວາມຈໍາເປັນທີ່ອາດຈະມີຄວາມສໍາຄັນ ເຊິ່ງຈະສົ່ງຜົນໃຫ້ມີການດັດແກ້ບັນຊີອາກອນລາຍໄດ້ໃນປີທີ່ໄດ້ທົບທວນຄືນ ຂອງເຈົ້າໜ້າທີ່ສ່ວຍສາອາກອນ.

ສໍາລັບປີສິ້ນສຸດວັນທີ 31 ທັນວາ 2023, ບໍລິສັດໄດ້ຮັບຮູ້ລາຍຈ່າຍອາກອນລາຍໄດ້ໃນໃບລາຍງານຜົນລາຍຮັບ 757 ລ້ານກີບ (2022: 2.641 ລ້ານກີບ)

ການຄໍານວນອາກອນກໍາໄລມີດັ່ງນີ້:

| | **ກີບ** |
|---|---|
| ກໍາໄລກ່ອນອາກອນລາຍໄດ້ - ທາງບັນຊີ | 10.073.572.705 |
| ລາຍການທີ່ມີຜົນທາງອາກອນ: | |
| ➢ ເກັບຄືນເງິນແຮສໍາລັບການເສຍມູນຄ່າຂອງຊັບສິນເພື່ອການຂາຍ | (7.500.000) |
| ➢ ກໍາໄລທີ່ບໍ່ຮັບຮູ້ຈາກອັດຕາແລກປ່ຽນ | (6.280.991.340) |
| **ລາຍໄດ້ທາງອາກອນ** | **3.785.081.365** |
| ລາຍຈ່າຍອາກອນກໍາໄລໃນອັດຕາ 20% | 757.016.273 |

## 22 ລາຍການກັບພາກສ່ວນທີ່ກ່ຽວຂ້ອງ

### ກ. ລາຍການພົວພັນກັບພາກສ່ວນທີ່ກ່ຽວຂ້ອງ

ລາຍການພົວພັນກັບພາກສ່ວນທີ່ກ່ຽວຂ້ອງໃນປີ ມີດັ່ງນີ້:

| | **2023**<br>**ກີບ** | **2022**<br>**ກີບ** |
|---|---|---|
| **ລາຍຈ່າຍອື່ນໆ:** | | |
| ຜູ້ຖືຫຸ້ນ-ລາຍຈ່າຍຄໍ້າປະກັນ | 1.945.190.023 | 2.989.992.039 |
| ຜູ້ຖືຫຸ້ນ ແລະ ພາກສ່ວນທີ່ກ່ຽວຂ້ອງ - ລາຍຈ່າຍດອກເບ້ຍ | 5.194.725.751 | - |
| | **7.139.915.774** | **2.989.992.039** |

## 22 ລາຍການກັບພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

### ກ. ລາຍການພົວພັນກັບພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

| | 2023<br>ກີບ | 2022<br>ກີບ |
|---|---|---|
| **ການຈັດຊື້ ແລະ ບໍລິການຈາກ:** | | |
| ພາກສ່ວນທີ່ກ່ຽວຂ້ອງອື່ນໆ | | |
| ຊື້ຊັບສິນເພື່ອການເຊົ່າ | - | 4.818.439.000 |
| ລາຍຈ່າຍນາຍໜ້າ | - | 241.750.000 |
| ລາຍຈ່າຍອື່ນໆ | - | 68.250.000 |
| | **-** | **5.128.439.000** |

* ລາຍການພົວພັນກັບພາກສ່ວນທີ່ກ່ຽວຂ້ອງອື່ນໆ ເປັນລາຍການລະຫວ່າງບໍລິສັດ ແລະ ຜູ້ສະໜອງທີ່ຢູ່ໃນຄະນະບໍລິຫານຂອງບໍລິສັດ.

ໃນວັນທີ 28 ເມສາ 2022 ຄະນະບໍລິຫານດັ່ງກ່າວໄດ້ລາອອກຕາມວາລະ. ອີງລະບຽບກ່ຽວກັບລາຍການພົວພັນກັບພາກສ່ວນທີ່ກ່ຽວຂ້ອງ ທີ່ອອກໂດຍ ຄະນະກໍາມະການຄຸ້ມຄອງຕະຫຼາດຫຼັກຊັບ (LSCO) ລົງວັນທີ 26 ຕຸລາ 2016. ຜູ້ສະໜອງດັ່ງກ່າວຈະບໍ່ຖືວ່າເປັນພາກສ່ວນທີ່ກ່ຽວຂ້ອງ. ດັ່ງນັ້ນລາຍການພົວພັນກັບພາກສ່ວນທີ່ກ່ຽວຂ້ອງຂ້າງເທິງນັ້ນແມ່ນສະເພາະລາຍການທີ່ເກີດຂຶ້ນລະຫວ່າງ ວັນທີ 1 ມັງກອນ - 28 ເມສາ 2022.

### ຂ. ຍອດຄົງຄ້າງທີ່ເກີດຈາກການຂາຍ. ການຊື້ສິນຄ້າ ແລະ ການບໍລິການ

| | 2023<br>ກີບ | 2022<br>ກີບ |
|---|---|---|
| **ໜີ້ຕ້ອງສົ່ງອື່ນໆ:** | | |
| ພາກສ່ວນທີ່ກ່ຽວຂ້ອງ - ດອກເບ້ຍຕ້ອງສົ່ງ<br>(ບົດອະທິບາຍຊ້ອນທ້າຍ 11) | 4.760.473.887 | - |
| **ເງິນກູ້ໄລຍະສັ້ນ** | | |
| ພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍຊ້ອນທ້າຍ 12) | 898.800.000.000 | - |

### ຄ. ຄ່າຕອບແທນຂອງຜູ້ບໍລິຫານ

ຄ່າຕອບແທນຂອງຜູ້ບໍລິຫານ ສໍາລັບປີສິ້ນສຸດວັນທີ່ 31 ທັນວາ. ປະກອບມີດັ່ງນີ້:

| | 2023<br>ກີບ | 2022<br>ກີບ |
|---|---|---|
| ຜົນປະໂຫຍດໄລຍະສັ້ນ | 819.134.000 | 856.000.000 |

## 23 ພາລະຜູກພັນ

### ພາລະຜູກພັນຕາມສັນຍາເຊົ່າເພື່ອການດໍາເນີນງານ

ບໍລິສັດມີພາລະຜູກພັນຕາມສັນຍາເຊົ່າພື້ນທີ່ສໍານັກງານໄລຍະຍາວ ສໍາລັບການເຊົ່າພື້ນທີ່ຫ້ອງການ

ພາລະຜູກພັນຕາມສັນຍາເຊົ່າເພື່ອການດໍາເນີນງານແຕ່ບໍ່ໄດ້ຮັບຮູ້ເປັນໜີ້ສິນມີດັ່ງນີ້:

| | **2023** | **2022** |
|---|---:|---:|
| | **ກີບ** | **ກີບ** |
| ພາຍໃນ 1 ປີ | 271.332.895 | 188.093.204 |
| ເກີນ 1 ປີ ແຕ່ບໍ່ເກີນ 5 ປີ | 1.296.595.944 | 1.482.771.482 |
| | **1.567.928.839** | **1.670.864.686** |

## 24 ເຫດການເກີດຂຶ້ນພາຍຫຼັງວັນທີ່ອອກບົດລາຍງານທາງການເງິນ

ອານຸມັດເງິນປັນຜົນ:

ອີງຕາມກອງປະຊຸມຂອງສະພາບໍລິຫານຄັ້ງວັນທີ 20 ກຸມພາ 2024, ສະພາບໍລິຫານຕົກລົງອານຸມັດຈ່າຍເງິນປັນຜົນ ໂດຍອີງຕາມກໍາໄລສຸດທິຂອງປີ 2023 ດ້ວຍມູນຄ່າ 15 ກີບ ຕໍ່ຮຸ້ນ (2022: ບໍ່ມີ) ລວມທັງໝົດເທົ່າກັບ 6.000 ລ້ານກີບ (2022: ບໍ່ມີ).